# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ເດີ່ນທາດຫຼວງ ຕູ້ ປ.ນ 662 ໂທລະສັບ ແລະ ໂທລະສານ: 413522, 454563 Email: phouthen.na@gmail.com

26-28 ກຸມພາ 2022
ປີທີ 11
ສະບັບທີ 823


## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນກຸມພາ



(ສພຊ) ໃນລະຫວ່າງວັນທີ 21-23 ກຸມພາ 2022 ທີ່ຫ້ອງປະຊຸມຄະນະປະຈຳສະພາແຫ່ງຊາດ ໄດ້ມີກອງປະຊຸມຄະນະປະຈຳສະພາແຫ່ງຊາດ (ຄປຈ.ສພຊ) ປະຈຳເດືອນກຸມພາ 2022 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານ ຄປຈ.ສພຊ, ປະທານສະພາແຫ່ງຊາດ ເຂົ້າຮ່ວມມີບັນດາຮອງປະທານ ຄປຈ.ສພຊ, ກຳມະການ ຄປຈ.ສພຊ, ຕາງໜ້າຈາກບັນດາກະຊວງ, ອົງການ ແລະ ແຂກ

ອ່ານຕໍ່ໜ້າ 3

## ຮອງປະທານ ສພຊ ເຄື່ອນໄຫວເຮັດວຽກ ກັບບັນດາການນຳຂອງແຂວງບໍລິຄຳໄຊ



ໜ້າ 2

## ເລຂາທິການ ສພຊ ຢ້ຽມຢາມເຮັດວຽກ ແລະ ມອບສະມາດບອດໃຫ້ ສພຂ ຊຽງຂວາງ



ໜ້າ 2

## ປະທານ ກສຕສ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2

(ສພຊ) ວັນທີ 9 ກຸມພາຜ່ານມາ, ທ່ານ ລີນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອ

ອ່ານຕໍ່ໜ້າ 2




## ຮອງປະທານ ກວສຊ ເຄື່ອນໄຫວວຽກງານ ຢູ່ 2 ແຂວງພາກເໜືອ

(ສພຊ) ເມື່ອຕົ້ນເດືອນກຸມພາຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ມີກອງປະຊຸມຮ່ວມລະຫວ່າງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ) ນຳໂດຍທ່ານ ວຽງແກ້ວ ວັນນະຈັກ ຮອງປະທານກຳມາທິການດັ່ງກ່າວ ແລະ

ອ່ານຕໍ່ໜ້າ 3



## ຫາລືການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ



(ສພຊ) ວັນທີ 10 ກຸມພາຜ່ານມາ, ທີ່ຫ້ອງປະຊຸມກຳມາທິການຍຸຕິທຳ (ກຍຕທ) ສະພາແຫ່ງຊາດ ໄດ້ມີກອງປະຊຸມຮ່ວມລະຫວ່າງ ກຳມາທິການຍຸຕິທຳ, ກຳມາທິການກົດໝາຍ (ກກໝ) ສະພາແຫ່ງຊາດ ກັບອົງກວດກາແຫ່ງລັດ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຫ້ອງວ່າການສຳນັກງານປະທານປະເທດ; ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານ ກຍຕທ; ມີບັນດາຮອງປະທານກຳມາທິການທີ່ກ່ຽວຂ້ອງ, ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຫົວໜ້າ-ຮອງຫົວໜ້າກົມ ພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມ.

ອ່ານຕໍ່ໜ້າ 2

## ສພຊ ສ້າງຄວາມເຂັ້ມແຂງ ທາງດ້ານວຽກງານການເງິນ ໃຫ້ພະນັກງານ

(ສພຊ) ເພື່ອເປັນການສ້າງຄວາມເຂັ້ມແຂງທາງດ້ານວຽກງານການເງິນຂອງລັດ ໃຫ້ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ (ສພຊ), ກົມການເງິນ ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງດ້ານວຽກງານ

ອ່ານຕໍ່ໜ້າ 3





## ຮອງປະທານ...

(ສພຊ) ວັນທີ 19 ກຸມພາ 2022 ຢູ່ຫ້ອງປະຊຸມຫ້ອງວ່າການແຂວງບໍລິຄຳໄຊ ທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ພົບປະຢ້ຽມຢາມ ເຮັດວຽກຮ່ວມກັບບັນດາການນຳຂອງແຂວງບໍລິຄຳໄຊ ເພື່ອຕິດຕາມຊີ້ນຳການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ. ໂດຍການຕ້ອນຮັບຢ່າງອົບອຸ່ນຂອງທ່ານ ກອງແກ້ວ ໄຊສົງຄາມ ກຳມະການສູນກາງພັກ ເລຂາພັກແຂວງ, ເຈົ້າແຂວງໆບໍລິຄຳໄຊ, ມີຄະນະປະຈຳພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ເລຂາພັກເມືອງ 7 ເມືອງ ຕະຫລອດຮອດຫົວໜ້າພະແນກການ-ກົມກອງ ອົງການຈັດຕັ້ງທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ກອງແກ້ວ ໄຊສົງຄາມ ໄດ້ລາຍງານກ່ຽວກັບສະພາບລວມ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໃນໄລຍະ 1 ປີຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ, ການຈັດຕັ້ງຜັນຂະຫຍາຍ 2 ວາລະແຫ່ງຊາດ ແລະ ການຈັດຕັ້ງເຜີຍແຜ່ເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໂດຍສັງເຂບໃຫ້ທ່ານຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະໄດ້ຮັບຊາບ ເຊິ່ງໃນໄລຍະ 1 ປີຜ່ານມາ ແຂວງບໍລິຄຳໄຊ ແມ່ນໄດ້ປະເຊີນໜ້າກັບຫລາຍຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຫລາຍດ້ານ ເປັນຕົ້ນແມ່ນບັນຫາການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ໄດ້ສົ່ງຜົນກະທົບໂດຍກົງ ແລະ ທາງອ້ອມຢ່າງຫລີກລ້ຽງບໍ່ໄດ້ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ. ປາກົດການຫຍໍ້ທໍ້, ໄພຫວ່າງງານ, ບັນຫາຢາເສບຕິດ ແລະ ອື່ນໆ ເຖິງວ່າຈະພົບຄວາມຫຍຸ້ງຍາກດັ່ງກ່າວ ແຕ່ແຂວງບໍລິຄຳໄຊ ກໍໄດ້ມີຄວາມພະຍາຍາມ ເອົາໃຈໃສ່ຊີ້ນຳ-ນຳພາແກ້ໄຂບັນຫາໃນດ້ານຕ່າງໆ ດ້ວຍຄວາມຮັບຜິດຊອບສູງ ແລະ ເປັນເຈົ້າການ ເພື່ອເຮັດໃຫ້ເສດຖະກິດຂອງແຂວງ ສາມາດຟື້ນຕົວໄດ້ ເຊິ່ງໃນນີ້ແຂວງໄດ້ສືບຕໍ່ແກ້ໄຂຂອດຂັ້ນຕ່າງໆໃນການສົ່ງເສີມການລົງທຶນຂອງພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ. ຕິດພັນກັບການຜັນຂະຫຍາຍນະໂຍບາຍຕ່າງໆ ເພື່ອຍູ້ແຮງເສດຖະກິດຂອງແຂວງໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ. ໃນປີ 2021 ອັດຕາການເຕີບໂຕເສດຖະກິດພາຍໃນແຂວງ ລວມຍອດຜະລິດຕະພັນພາຍໃນ (GPP) ໄດ້ 6.670 ກວ່າຕື້ກີບ, ອັດຕາການຂະຫຍາຍຕົວ 4,7 ກວ່າ % ສະເລ່ຍຕໍ່ຫົວຄົນ 20 ລ້ານກວ່າກີບ. ໃນນີ້ຂະແໜງກະສິກຳ-ປ່າໄມ້ຂະຫຍາຍຕົວ 12,8 % ກວມ 34 %; ຂະແໜງອຸດສາຫະກຳ-ກໍ່ສ້າງຂະຫຍາຍຕົວ 4,92% ກວມ 44 % ແລະ ຂະແໜງການບໍລິການຫລຸດລົງ -4,49 % ກວມ 22 %.

ໂອກາດດັ່ງກ່າວ ທ່ານ ນາງ ສູນທອນ ໄຊຍະຈັກ ຍັງໄດ້ກ່າວສະແດງຄວາມຍ້ອງຍໍຊົມເຊີຍ ມາຍັງຄະນະພັກແຕ່ລະຂັ້ນ ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານໃນດ້ານຕ່າງໆ ສຳເລັດຜົນຕະຫລອດໄລຍະຜ່ານມາ ພ້ອມນັ້ນທ່ານຍັງໄດ້ຮຽກຮ້ອງໃຫ້ຄະນະຮັບຜິດຊອບວຽກງານທີ່ກ່ຽວຂ້ອງ ຈົ່ງໄດ້ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານທີ່ຍັງຄົງຄ້າງ ໂດຍສະເພາະແມ່ນການຊຸກຍູ້ສົ່ງເສີມການລົງທຶນ ຂອງພາກເອກະຊົນພາຍໃນແຂວງ, ການຈັດຫາສ້າງວຽກເຮັດງານທຳ ໃຫ້ກັບພໍ່ແມ່ປະຊາຊົນພາຍໃນແຂວງ ທີ່ໄດ້ຮັບຜົນກະທົບຈາກພະຍາດໂຄວິດ-19 ສືບຕໍ່ເອົາໃຈໃສ່ຕໍ່ກັບວຽກງານ ປກຊ-ປກສ, ການພົວພັນຮ່ວມມືກັບຕ່າງປະເທດ ແລະ ອື່ນໆ.

ຕອນບ່າຍຂອງວັນດຽວກັນ ທ່ານຮອງປະທານສະພາແຫ່ງຊາດ ພ້ອມຄະນະ ຍັງໄດ້ເດີນ ທາງໄປສຳຫລວດເບິ່ງໂຄງການກໍ່ສ້າງຂົວຂ້າມແມ່ນ້ຳຂອງລາວ-ໄທ ແຫ່ງທີ V (ປາກຊັນ-ບຶງການ) ຢູ່ທີ່ບ້ານກ້ອຍອຸດົມ ເມືອງປາກຊັນ ເຊິ່ງປັດຈຸບັນ ການກໍ່ສ້າງຂົວຂ້າມນ້ຳຂອງແຫ່ງດັ່ງກ່າວ ແມ່ນມີຄວາມຄືບໜ້າ 25,76 % ຂອງບັນດາໜ້າວຽກທັງໝົດ ແລະ ລື່ນແຜນການ 4,66 %. ຈາກນັ້ນ, ກໍໄດ້ລົງພົບປະຢ້ຽມຢາມພໍ່ແມ່ປະຊາຊົນ ບ້ານຫາງຊິງສະຫວ່າງ ເພື່ອສຳຫລວດເບິ່ງການປູກຜັກເຮືອນຮົ່ມ ຂອງພໍ່ແມ່ປະຊາຊົນ ເພື່ອເປັນສິນຄ້າ ຈຳນວນ 23 ຫລັງ ໂດຍໂຄງການພັດທະນາບ້ານແບບໃໝ່ແຊມາອືນອຸນດົງ ສ.ເກົາຫລີ ປະຈຳ ສປປລາວ ທີ່ໄດ້ໃຫ້ທຶນສະໜັບສະໜູນພໍ່ແມ່ປະຊາຊົນ ຈັດຕັ້ງປະຕິບັດໃນໄລຍະຜ່ານມາຕື່ມອີກ.

(ນາງ ກົງໃຈ ແສງອຳພັນ)



## ເລຂາ...

(ສພຊ) ໃນລະຫວ່າງວັນທີ 16-18 ກຸມພາ 2022 ທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການ ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກ ຢູ່ແຂວງຊຽງຂວາງ ເຊິ່ງໄດ້ເຂົ້າພົບເຈົ້າແຂວງໆຊຽງຂວາງ ເພື່ອລາຍງານຈຸດປະສົງການມາເຄື່ອນໄຫວ ພ້ອມທັງໄດ້ປຶກສາຫາລືວຽກງານທີ່ທັງສອງຝ່າຍໃຫ້ຄວາມສົນໃຈ. ຈາກນັ້ນ, ກໍໄດ້ເຂົ້າພົບຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 9 ແລະ ປະທານສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ.

ພ້ອມດຽວກັນນັ້ນ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ຍັງໄດ້ມອບເຄື່ອງສະມາດບອດ ເພື່ອຮັບໃຊ້ກອງປະຊຸມທາງໄກ, ເຝິກອົບຮົມ, ສຳມະນາ ໃຫ້ແກ່ ສພຂ ຊຽງຂວາງ ເຊິ່ງຕາງໜ້າໃຫ້ ສພຂ ຊຽງຂວາງ ກ່າວຮັບໂດຍທ່ານ ນາງ ສາຍພູເງິນ ອຸດົມສຸກ ເລຂາທິການ ສພຂ; ເຂົ້າຮ່ວມເປັນສັກຂີພິຍານມີທ່ານ ນາງ ສົມພອນ ໂສພິລາວັນ ຮອງປະທານ ສພຂ, ມີບັນດາຄະນະປະຈຳ ສພຂ, ຫົວໜ້າ-ຮອງຫົວໜ້າຂະແໜງການ, ວິຊາການ ແລະ ພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍ.

ເຄື່ອງທີ່ນຳມາມອບໃນຄັ້ງນີ້ ແມ່ນສະມາດບອດ (VIEWSONIC IFP6570) ທີ່ໄດ້ຮັບການຊ່ວຍເຫລືອຈາກແຜນງານເຊກາ ມູນຄ່າ 130 ລ້ານກີບ ເພື່ອເປັນການຍົກສູງການຫັນເປັນທັນສະໄໝການນຳໃຊ້ອຸປະກອນສື່ສານໄອທີເຂົ້າໃນການປະຕິບັດໜ້າທີ່ວຽກງານຂອງ ສພຊ ກໍຄື ສພຂ ເປັນຕົ້ນແມ່ນ ການຈັດກອງປະຊຸມດ້ວຍຮູບແບບທາງໄກ ໂດຍການນຳໃຊ້ລະບົບສະມາດບອດໃຫ້ແກ່ ສພຂ ໃນຂອບເຂດທົ່ວປະເທດ.

ໂອກາດດັ່ງກ່າວ, ທ່ານ ນາງ ສາຍພູເງິນ ອຸດົມສຸກ ໄດ້ສະແດງຄວາມຂອບໃຈ ຕໍ່ສະພາແຫ່ງຊາດທີ່ໄດ້ນຳເຄື່ອງສະມາດບອດມາມອບໃຫ້ຄັ້ງນີ້ ເຊິ່ງທ່ານໃຫ້ຮູ້ວ່າ ໃນໄລຍະຜ່ານມາ, ສພຂ ຊຽງຂວາງ ແມ່ນມີຄວາມຫຍຸ້ງຍາກເນື່ອງຈາກບໍ່ມີອຸປະກອນຮັບໃຊ້ໃຫ້ແກ່ການປະຊຸມທາງໄກ ໃນການເຂົ້າຮ່ວມກອງປະຊຸມແຕ່ລະຄັ້ງແມ່ນໄດ້ຂໍນຳໃຊ້ຫ້ອງປະຊຸມຂອງພາກສ່ວນອື່ນ. ພ້ອມນັ້ນ, ທ່ານຍັງໄດ້ໃຫ້ຄຳໝັ້ນວ່າຈະນຳເອົາເຄື່ອງສະມາດບອດນີ້ ນຳໄປໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານຂອງ ສພຂ ແລະ ຈະພ້ອມກັນປົກປັກຮັກສາໃຫ້ສາມາດນຳໃຊ້ໄດ້ຍາວນານ.

ໃນໂອກາດດຽວກັນນີ້, ທ່ານ ນາງ ປິ່ງຄຳ ລາຊະສິມມາ ພ້ອມດ້ວຍຄະນະ ຍັງໄດ້ເຮັດວຽກຮ່ວມກັບຄະນະເລຂາທິການ ສພຂ ຊຽງຂວາງ ເພື່ອເກັບກຳຂໍ້ມູນ, ຕິດຕາມ ແລະ ຊຸກຍູ້ການເຄື່ອນໄຫວວຽກງານຂອງຄະນະເລຂາທິການ ສພຂ ໃນການປະຕິບັດໜ້າທີ່ວຽກງານຂອງຕົນ ໂດຍສະເພາະການເປັນເສນາທິການໃຫ້ແກ່ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ ເຊິ່ງບັນດາຜູ້ເຂົ້າຮ່ວມກໍໄດ້ແລກປ່ຽນຄຳຄິດຄຳເຫັນ ແລະ ປຶກສາຫາລືກັນ ໃນແຕ່ລະວຽກງານທີ່ກ່ຽວຂ້ອງຢ່າງກົງໄປກົງມາ ແລະ ມີເນື້ອໃນທີ່ອຸດົມສົມບູນ.

ການເຄື່ອນໄຫວໃນຄັ້ງນີ້, ຄະນະຍັງໄດ້ຢ້ຽມຢາມບໍ່ນ້ຳອຸ່ນ ແລະ ຖ້ຳປິວ ຢູ່ເມືອງຄຳ ແຂວງຊຽງຂວາງ ອີກດ້ວຍ.

(ນາງ ປາກາລັກ ພົມມີໄຊ)



## ປະທານ...

ທີ 2 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນນະຄອນຫລວງວຽງຈັນ (ສປນວ) ຊຸດທີ II ຢູ່ທີ່ກະຊວງການຕ່າງປະເທດ; ມີທ່ານ ໄຊຄຳ ອຸ່ນມີໄຊ ຮອງປະທານຄະນະກວດກາສູນກາງພັກ, ຮອງປະທານອົງການກວດກາລັດ, ຮອງຫົວໜ້າອົງການຕ້ານການສໍ້ລາດບັງຫລວງຂັ້ນສູນກາງ ທັງເປັນ ສສຊ ປະຈຳເຂດເລືອກຕັ້ງ; ທ່ານ ນາງ ສົມປະເສີດ ສີຫາລາດ ສສຊ ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນນະຄອນຫລວງວຽງຈັນ ຊຸດທີ II, ຮອງປະທານອົງການແນວລາວສ້າງຊາດ ນະຄອນຫລວງ ໂດຍການຕ້ອນຮັບຂອງທ່ານ ທອງຜ່ານ ສະຫວັນເພັດ ຮອງລັດຖະມົນຕີກະຊວງການຕ່າງປະເທດ, ມີບັນດາທ່ານຫົວໜ້າ-ຮອງຫົວໜ້າກົມ, ຫົວໜ້າ-ຮອງຫົວໜ້າພະແນກ ຕະຫລອດຮອດວິຊາການຂອງກະຊວງເຂົ້າຮ່ວມຢ່າງພ້ອມພຽງ.

ໃນການເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງການລາຍງານສະພາບລວມຂອງກະຊວງການຕ່າງປະເທດໂດຍຫຍໍ້; ຈາກນັ້ນ, ບັນດາທ່ານຜູ້ແທນ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມຂອງສະພາທັງສອງຂັ້ນ ແລະ ໄດ້ຮັບເອົາຄຳຄິດຄຳເຫັນ ຄຳສະເໜີຂອງພະນັກງານ ເພື່ອນຳໄປສະເໜີພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂໃນຕໍ່ຫນ້າ ເປັນຕົ້ນການສະເໜີໃຫ້ມີການຄົ້ນຄວ້າຫາຕະຫລາດເພື່ອຮອງຮັບສິນຄ້າຫັດຖະກຳ, ຊຸກຍູ້ສົ່ງເສີມໃຫ້ມີການນຳໃຊ້ຜະລິດຕະພັນພາຍໃນຂອງລາວໃຫ້ຫລາຍຂຶ້ນ,ການຄຸ້ມຄອງ ແລະ ສົ່ງເສີມການນຳໃຊ້ເງິນກີບ, ເພີ່ມທະວີການຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ບັນຫາອື່ນໆອີກຈຳນວນໜຶ່ງ.



## ທາລີ...

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ ແມ່ນເພື່ອຄົ້ນຄວ້າ ແລະ ປຶກສາຫາລື ເພື່ອຄວາມເປັນເອກະພາບກັນ ຕໍ່ກັບການປັບປຸງບາງມາດຕາ ແລະ ບາງໝວດຂອງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ທີ່ພົວພັນກັບບັນດາອົງການທີ່ຮັບຜິດຊອບໃນການພິຈາລະນາ ແລະ ແກ້ໄຂຄຳສະເໜີ ຕາມທີ່ໄດ້ກຳນົດໄວ້ໃນພາກທີ III ໝວດທີ 1 ແລະ ກົນໄກ, ຂັ້ນຕອນໃນການພິຈາລະນາຄຳຮ້ອງຂໍຄວາມເປັນທຳ ທີ່ພົວພັນກັບການແກ້ໄຂຄຳສະເໜີ ເປັນຕົ້ນ: ການກຳນົດໂຄງຮ່າງຂອງກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງໃໝ່; ໝວດການພິຈາລະນາ ແລະ ແກ້ໄຂຄຳສະເໜີໃນມາດຕາ 17 ເຊິ່ງໄດ້ກຳນົດເອົາ ອົງການກວດກາແຫ່ງລັດ ເຂົ້າໃສ່ຕື່ມ; ການກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແຕ່ລະອົງການທີ່ຮັບຜິດຊອບໃນການພິຈາລະນາ ແລະ ແກ້ໄຂຄຳສະເໜີຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18, 19, 20, 21 ແລະ 22 ຂອງກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງໃໝ່ ເພື່ອໃຫ້ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງເປັນຕົ້ນ: ກົດໝາຍວ່າດ້ວຍ ການກວດກາລັດ; ກົດໝາຍວ່າດ້ວຍລັດຖະບານ; ກົດໝາຍວ່າດ້ວຍອົງການປົກຄອງທ້ອງຖິ່ນ; ກົດໝາຍວ່າດ້ວຍສານປະຊາຊົນ; ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ. ພ້ອມທັງຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດ ໃຫ້ມີຄວາມສອດຄ່ອງ, ວ່ອງໄວ ແລະ ຖືກຕ້ອງ; ກົນໄກ ແລະ ຂັ້ນຕອນໃນການພິຈາລະນາ ແລະ ແກ້ໄຂຄຳສະເໜີ ພາຍຫລັງທີ່ອົງການທີ່ຮັບຜິດຊອບໃນແຕ່ລະຂັ້ນ; ການພິຈາລະນາ ແລະ ແກ້ໄຂຄຳສະເໜີເປັນຂັ້ນສຸດທ້າຍ; ການພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງລັດຖະບານ ຈະມອບໃຫ້ພາກສ່ວນໃດເປັນຜູ້ຮັບຜິດຊອບຄົ້ນຄວ້າ; ຕໍ່ກັບການກຳນົດປະເພດຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ທີ່ພົວພັນກັບການພິຈາລະນາ ແລະ ແກ້ໄຂຄຳສະເໜີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ແລະ 31 ຂອງກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກສະບັບປັບປຸງໃໝ່ນີ້ ຄວນຈະກຳນົດໃຫ້ຜົນການແກ້ໄຂຄຳສະເໜີຂອງອົງການກວດກາລັດໃນແຕ່ລະຂັ້ນ ເຂົ້າເປັນປະເພດຄຳຮ້ອງຂໍຄວາມເປັນທຳ ທີ່ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ນຳມາພິຈາລະນາ ຫລືບໍ່? ເພື່ອຮັບປະກັນໃຫ້ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແຕ່ລະອົງການຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ທັງເປັນການຮັບປະກັນໃຫ້ແກ່ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ ຕາມກົດໝາຍ.



## ກອງປະຊຸມ...

ຖືກເຊີນ (ໃນຮູບແບບທາງໄກ).

ກອງປະຊຸມ ໄດ້ຮັບຟັງການລາຍງານຮ່າງແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX; ລາຍງານຜົນສຳເລັດການດຳເນີນກອງປະຊຸມຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ ຈາກກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ລາຍງານວຽກງານຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ກຳມາທິການການຕ່າງປະເທດ; ກຳມາທິການວັດທະນະທຳ-ສັງຄົມ; ກຳມາທິການບັນດາເຜົ່າ; ກຳມາທິການແຜນການການເງິນ ແລະ ການກວດສອບ; ບົດລາຍງານກຳມາທິການຍຸຕິທຳ ກ່ຽວກັບການສະເໜີແຕ່ງຕັ້ງ ຜູ້ພິພາກສາຊັ້ນສີ່ ຂອງສານປະຊາຊົນ ຕາມການສະເໜີຂອງສານປະຊາຊົນສູງສຸດ. ຈາກນັ້ນ, ບັນດາທ່ານຄະນະປະຈຳໄດ້ສຸມໃສ່ປະກອບຄຳເຫັນຢ່າງມີຈຸດສຸມ-ເຂົ້າສູ່ບັນຫາ ຄົ້ນຄວ້າໃສ່ບັນດາບົດລາຍງານຕ່າງໆ ທີ່ນຳມາລາຍງານໃນກອງປະຊຸມໃນຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາຢ່າງມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດລວມມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

ທັງນີ້ ກໍເພື່ອຮັບປະກັນໃຫ້ການພິຈາລະນາ ແລະ ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແລະ ເພື່ອກຳນົດ ຫົວຂໍ້ເນື້ອໃນແບ່ງງານໃຫ້ພາກສ່ວນຕ່າງໆ ໃນການຮັບໃຊ້ ແລະ ສ້າງສິ່ງອຳນວຍຄວາມສະດວກຮອບດ້ານໃຫ້ແກ່ການກະກຽມ ແລະ ດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຮັບປະກັນຄຸນນະພາບ ແລະ ທັນເວລາ.

(ສອນສັກ ວັນວິໄຊ)



## ຮອງປະທານ...

ສພຂ ຫົວພັນ ນຳໂດຍທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ທັງເປັນປະທານ ສພຂ, ມີບັນດາຄະນະປະຈຳ, ຄະນະເລຂາທິການຕະຫລອດຮອດພະນັກງານວິຊາການ ຂະແໜງການກ່ຽວຂ້ອງພາຍໃນ ສພຂ ເຂົ້າຮ່ວມ.

ໃນກອງປະຊຸມ ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ), ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການປະຕິບັດໜ້າທີ່ວຽກງານ ຂອງ ສສຊ ປະຈຳເຂດເລືອກຕັ້ງ ແລະ ສສຂ ເຊັ່ນ: ການຕິດຕາມກວດກາ, ການລົງພົບປະຜູ້ມີສິດເລືອກຕັ້ງ, ການກະກຽມ ແລະ ດຳເນີນກອງປະຊຸມ ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ແລະ ກອງປະຊຸມ ສພຂ, ຂອດປະສານງານ ລະຫວ່າງ ສພຂ ກັບບັນດາພະແນກການຂອງແຂວງ, ອົງການປົກຄອງເມືອງ, ການກະກຽມ ແລະ ດຳເນີນການເລືອກຕັ້ງ ສສຊ ຊຸດທີ IX ແລະ ສສຂ ຊຸດທີ II ເປັນຕົ້ນ: ການຄັດເລືອກບຸກຄະລາກອນ ຜູ້ທີ່ມີມາດຖານ, ເງື່ອນໄຂ, ຊຸດສ່ວນລະຫວ່າງເພດ, ເຜົ່າ, ດ້ານງົບປະມານຮັບໃຊ້ ແລະ ບັນຫາອື່ນໆ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນປະກອບຄຳຄິດຄຳເຫັນ ແລະ ສະເໜີບັນຫາຄວາມຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ເພື່ອເປັນຂໍ້ມູນໃຫ້ແກ່ການປັບປຸງໃນຕໍ່ໜ້າ. ພ້ອມນັ້ນ, ຄະນະຍັງໄດ້ລົງຕິດຕາມຊຸກຍູ້, ເກັບກຳສະພາບການເຄື່ອນໄຫວວຽກງານຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ເມືອງວຽງໄຊ ໂດຍໄດ້ຮັບຟັງການລາຍງານຈາກຜູ້ຕາງໜ້າ ຄະນະ ສສຊ ປະຈຳເຂດເລືອກຕັ້ງເມືອງວຽງໄຊ ກ່ຽວກັບຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຂອດປະສານງານລະຫວ່າງ ສສຊ ປະຈຳເຂດເລືອກຕັ້ງ ແລະ ພາກສ່ວນກ່ຽວຂ້ອງຂອງເມືອງ, ສິ່ງອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ການເຄື່ອນໄຫວວຽກງານ, ດ້ານງົບປະມານຮັບໃຊ້ ແລະ ອື່ນໆ.

ຕໍ່ມາໃນວັນທີ 14 ກຸມພາ 2022 ໄດ້ມີກອງປະຊຸມຮ່ວມລະຫວ່າງ ກວສຊ ແລະ ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ, ທີ່ຫ້ອງປະຊຸມ ສພຂ ໂດຍການເປັນປະທານຮ່ວມຂອງທ່ານ ທອງສີ ເສົາສຸລິພົມ ປະທານ ສພຂ ແລະ ທ່ານ ວຽງແກ້ວ ວັນນະຈັກ ຮອງປະທານກຳມາທິການດັ່ງກ່າວ, ມີຄະນະຈາກ ກວສຊ, ຄະນະປະຈຳ ສພຂ, ຮອງປະທານຄະນະກຳມະການ, ຮອງເລຂາທິການ ສພຂ ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງທ່ານ ສົມຈິດ ຮັບລະກອນ ຮອງປະທານ ສພຂ, ຜູ້ຊີ້ນຳວຽກງານຄະນະ ສສຊ ປະຈຳເຂດເລືອກຕັ້ງເຊິ່ງທ່ານໄດ້ລາຍງານສະພາບໂດຍຫຍໍ້ກ່ຽວກັບການຊີ້ນຳ-ນຳພາ ການເຄື່ອນໄຫວການຈັດຕັ້ງປະຕິບັດວຽກງານຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ໃນໄລຍະຜ່ານມາ. ຈາກນັ້ນ, ທັງສອງຝ່າຍໄດ້ແລກປ່ຽນບົດຮຽນ ແລະ ປຶກສາຫາລື ກ່ຽວກັບວຽກງານໂຄງປະກອບການຈັດຕັ້ງຂອງ ສພຂ; ການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳສຳຄັນຂອງແຂວງ, ການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະ ມະຕິກອງປະຊຸມສະພາປະຊາຊົນແຂວງ; ການພົບປະປະຊາຊົນຂອງ ສສຊ ປະຈຳເຂດເລືອກຕັ້ງ ແລະ ສສຂ; ການກະກຽມ ແລະ ດຳເນີນກອງປະຊຸມຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ແລະ ກອງປະຊຸມ ສພຂ. ທັງນີ້, ກໍເພື່ອເປັນຂໍ້ມູນໃຫ້ການປັບປຸງວຽກງານຂອງສະພາແຫ່ງຊາດ ກໍຄື ສພຂ ໄດ້ຮັບການປັບປຸງ ແລະ ຍົກບົດບາດຂອງສະພາໃຫ້ສູງຂຶ້ນ.

ໃນໂອກາດດຽວກັນ, ຄະນະທີມງານຂອງ ກວສຊ ຍັງສືບຕໍ່ເຄື່ອນໄຫວຕິດຕາມຊຸກຍູ້ ແລະ ເກັບກຳຂໍ້ມູນການເຄື່ອນໄຫວວຽກງານຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງເມືອງຍອດອູ ແຂວງຜົ້ງສາລີ ຕື່ມອີກ.

(ນາງ ປຸ້ຍນິຕາ ເພັງມີໄຊ ແລະ ນາງ ສຸກສົມພອນ ແກ້ວແສງພະຈັນ)

## ສພຊ...



ການເງິນຂອງລັດ ແລະ ງົບປະມານຊ່ວຍເຫລືອລ້າ ຈາກອົງການຈັດຕັ້ງສາກົນ ໃຫ້ແກ່ພະນັກງານ-ລັດຖະກອນພາຍໃນ ສພຊ ລະຫວ່າງວັນທີ 12-13 ກຸມພາ 2022 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ, ມີທ່ານ ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ, ຜູ້ຊີ້ນຳກົມການເງິນ, ມີຫົວໜ້າກົມ-ຮອງຫົວໜ້າກົມການເງິນ, ພະນັກງານ-ລັດຖະກອນຈາກບັນດາກົມພາຍໃນສະພາແຫ່ງຊາດເຂົ້າຮ່ວມ.

ໃນກອງປະຊຸມ ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ການຈັດກອງປະຊຸມເຝິກອົບຮົມໃນຄັ້ງນີ້ ໄດ້ດຳເນີນຂຶ້ນໃນໄລຍະທີ່ບັນດາກົງຈັກຂອງສະພາແຫ່ງຊາດ ກໍຄືກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ພວມສຸມໃສ່ຈັດຕັ້ງປະຕິບັດແຜນການຕິດຕາມກວດກາຂອງຕົນ ເພື່ອເກັບກຳສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ລັດຖະທຳມະນູນ, ກົດໝາຍ, ໂດຍສະເພາະແມ່ນການຈັດຕັ້ງປະຕິບັດບັນດາມະຕິຂອງສະພາແຫ່ງຊາດ ເພື່ອຈະເປັນຂໍ້ມູນອັນສຳຄັນໃຫ້ຄະນະປະຈຳ ຊີ້ນຳບັນດາກົງຈັກພາຍໃນສະພາແຫ່ງຊາດ. ບັນດາຫົວຂໍ້ທີ່ໄດ້ນຳມາສະເໜີໃຫ້ນັກສຳມະນາກອນຮັບຮູ້ໃນຄັ້ງນີ້ ແມ່ນມີຄວາມສຳຄັນຫລາຍ ເພາະຕິດພັນກັບການປະຕິບັດໜ້າທີ່ການເປັນເສນາທິການຄົ້ນຄວ້າ, ສ້າງແຜນການນຳໃຊ້ງົບປະມານຂອງລັດ ແລະ ງົບປະມານຊ່ວຍເຫລືອລ້າຈາກອົງການຈັດຕັ້ງສາກົນ ເຊິ່ງຕິດພັນກັບການຂຶ້ນແຜນວຽກ, ແຜນຄົນ, ແຜນເງິນ ໃນການລົງເຄື່ອນໄຫວວຽກງານຕາມພາລະບົດບາດ, ການເຝິກອົບຮົມສຳມະນາຕ່າງໆ ໃຫ້ບັນດາກົງຈັກທີ່ຕົນສັງກັດຢູ່ ສອດຄ່ອງກັບລະບຽບການທີ່ໄດ້ກຳນົດ ທັງຈະເຮັດໃຫ້ບັນດານັກເຝິກອົບຮົມ ໄດ້ເຂົ້າໃຈເລິກເຊິ່ງກວ່າເກົ່າຂັ້ນຕອນການປະຕິບັດລະບຽບຫລັກການກ່ຽວກັບການເງິນ ເພື່ອໃຫ້ນຳໄປຈັດຕັ້ງປະຕິບັດຢ່າງເປັນເອກະພາບ ທັງຮັບປະກັນການປະຕິບັດຕາມລະບຽບການຢ່າງເຂັ້ມງວດ. ທ່ານຍັງຮຽກຮ້ອງມາຍັງພະນັກງານ-ລັດຖະກອນທຸກທ່ານ ທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຈົ່ງເອົາໃຈໃສ່ຕິດຕາມຮັບຟັງການສະເໜີບົດຮຽນຂອງວິທະຍາກອນ ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ, ວິເຄາະບັນຫາ, ປະກອບຄຳເຫັນ ຖ້າມີອັນໃດບໍ່ເຂົ້າໃຈ ຫລື ບໍ່ທັນຈະແຈ້ງ ກໍໃຫ້ຍົກຄຳຖາມ ແລະ ແລກປ່ຽນຄຳຄິດຄຳເຫັນ ເພື່ອເຮັດໃຫ້ກອງປະຊຸມເຝິກອົບຮົມ ດຳເນີນໄປດ້ວຍຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ກຳນົດໄວ້.

ກອງປະຊຸມຄັ້ງນີ້, ນັກສຳມະນາກອນ ໄດ້ຮຽນຮູ້ກ່ຽວກັບຄຳແນະນຳວ່າດ້ວຍການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022; ການສ້າງແຜນງົບປະມານຮັບໃຊ້ການເຝິກອົບຮົມ, ສຳມະນາ ທີ່ນຳໃຊ້ງົບປະມານຂອງລັດ; ການປະກອບເອກະສານ ເພື່ອອອກຄຳສັ່ງຈ່າຍເງິນສິດຮັບໃຊ້ວຽກງານຂອງສະພາແຫ່ງຊາດ; ຄວາມຮູ້ພື້ນຖານໃນການຄິດໄລ່ເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ; ຂັ້ນຕອນການປະສານງານພາຍໃນສະພາແຫ່ງຊາດ ແລະ ການປະສານງານກັບຜູ້ໃຫ້ທຶນຊ່ວຍເຫລືອລ້າ; ການປະກອບເອກະສານ, ການສ້າງແຜນກິດຈະກຳ ແລະ ການຂຽນບົດລາຍງານກອງປະຊຸມທີ່ນຳໃຊ້ງົບປະມານຊ່ວຍເຫລືອຈາກອົງການຈັດຕັ້ງສາກົນ; ແນະນຳວິທີການ ແລະ ລະບຽບການວ່າດ້ວຍການເບີກຈ່າຍງົບປະມານທີ່ອົງການຈັດຕັ້ງສາກົນເປັນຜູ້ຄຸ້ມຄອງງົບປະມານໂດຍກົງ; ການສ້າງແຜນງົບປະມານ ແລະ ການລາຍງານທີ່ນຳໃຊ້ງົບປະມານຂອງອົງການຈັດຕັ້ງສາກົນ.

(ກົງທະນູຄຳ ພົພັດເສລີ)



# ປະກາດກົງຈັກການຈັດຕັ້ງ ແລະ ແຕ່ງຕັ້ງບຸກຄະລາກອນ ຂອງຄະນະ ສສຂ ຊຸດທີ II ປະຈຳເມືອງຂວາ ແຂວງຜົ້ງສາລີ



(ສພຊ) ຕອນເຊົ້າວັນທີ 21 ກຸມພາ 2022 ທີ່ສະໂມສອນເມືອງຂວາ ໄດ້ຈັດພິທີປະກາດກົງຈັກການຈັດຕັ້ງ ແລະ ແຕ່ງຕັ້ງບຸກຄະລາກອນຂອງຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ II ປະຈຳເມືອງຂວາ ແຂວງຜົ້ງສາລີ ໂດຍການເປັນປະທານຂອງທ່ານ ທອງສີ ເສົາສຸລິພົມ ປະທານ ສພຂ ຜົ້ງສາລີ, ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ 2 ແຂວງຜົ້ງສາລີ; ມີທ່ານ ພອນທະວີ ໄຊມົນຕີ ເຈົ້າເມືອງໆຂວາ, ສສຊ ປະຈຳເຂດເລືອກຕັ້ງ, ຄະນະ ສສຂ ຊຸດທີ II, ຄະນະປະຈຳພັກເມືອງ, ບັນດາທ່ານຫົວໜ້າຫ້ອງການ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີ, ໄດ້ຮັບຟັງທ່ານ ບຸນແກ້ວ ເລທີວັນ ຫົວໜ້າຄະນະຈັດຕັ້ງເມືອງ ໄດ້ຜ່ານມະຕິວ່າດ້ວຍການແຕ່ງຕັ້ງຄະນະ ສສຂ ຊຸດທີ II ປະຈຳເມືອງ ສະບັບເລກທີ 62 ຄປຈຂ, ລົງວັນທີ 14 ກຸມພາ 2022 ຕົກລົງແຕ່ງຕັ້ງທ່ານ ພົມມີ ອິນມະສອນ ສສຂ ເປັນຫົວໜ້າ, ທ່ານ ອູເດດ ມະນີວົງ ເປັນຮອງ, ທ່ານ ບຸນສາລີ ຈິດດາພອນ ແລະ ທ່ານ ນາງ ລຸນ ຄຳວົງໃຈ ເປັນຄະນະ; ມະຕິວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະ ສສຂ ປະຈຳເມືອງ; ຮັບຟັງທ່ານ ພົມມີ ອິນມະສອນ ຫົວໜ້າຄະນະ ສສຂ ປະຈຳເມືອງ; ມະຕິວ່າດ້ວຍການແຕ່ງຕັ້ງຄະນະປະຈຳສະພາປະຊາຊົນແຂວງຊີ້ນຳເມືອງ ສະບັບເລກທີ 16/ຄປຈຂ, ວັນທີ 17 ມັງກອນ 2021.

ໂອກາດດຽວກັນນີ້, ທ່ານ ທອງສີ ເສົາສຸລິພົມ ຍັງໄດ້ໃຫ້ກຽດໂອ້ລົມຕໍ່ພິທີດັ່ງກ່າວ ເຊິ່ງທ່ານໄດ້ສະແດງຄວາມຂອບໃຈ ແລະ ຊົມເຊີຍຕໍ່ຄະນະພັກ, ອົງການປົກຄອງທ້ອງຖິ່ນ, ການຈັດຕັ້ງທຸກພາກສ່ວນ ແລະ ປະຊາຊົນບັນດາເຜົ່າ ຊາວເມືອງຂວາ ທີ່ໄດ້ປະກອບສ່ວນຊຸກຍູ້ການເລືອກຕັ້ງຜ່ານມາ ທີ່ໄດ້ເລືອກຕັ້ງເອົາຕົວແທນຂອງຕົນໄປປະຕິບັດໜ້າທີ່ຢູ່ໃນສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຕາມທີ່ກົດໝາຍກຳນົດໄວ້ ທັງເອື້ອອຳນວຍຄວາມສະດວກຮອບດ້ານໃຫ້ແກ່ການເຄື່ອນໄຫວຂອງສສຊແລະສສຂຢູ່ທ້ອງຖິ່ນຕົນ. ພ້ອມກັນນັ້ນ, ທ່ານຍັງໄດ້ເໜັ້ນບາງບັນຫາຕໍ່ຄະນະ ສສຂ ປະຈຳເມືອງ ເປັນຕົ້ນແມ່ນການປະສານສົມທົບອຳນາດການປົກຄອງທອງຖິ່ນສືບຕໍ່ປັບປຸງກົງຈັກການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຢູ່ພາຍໃນ ໃຫ້ສອດຄ່ອງກັບທີ່ຕັ້ງ ແລະ ຈຸດພິເສດຂອງທ້ອງຖິ່ນ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃນຄະນະຕາມຂົງເຂດວຽກງານທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ; ປັບປຸງກົງຈັກໜ່ວຍງານເສນາທິການຊ່ວຍວຽກຄະນະ ສສຂ ປະຈຳເມືອງ ເພື່ອຮັບປະກັນເປັນເສນາທິການທີ່ເຂັ້ມແຂງຮອບດ້ານໃຫ້ແກ່ຄະນະ ສສຂ ປະຈຳເມືອງຂວາ; ສືບຕໍ່ປັບປຸງແບບວິທີເຮັດວຽກ, ການຂໍທິດຊີ້ນຳ-ນຳພາຂອງຄະນະພັກອຳນາດການປົກຄອງເມືອງ, ການພົວພັນປະສານສົມທົບກັບບັນດາຫ້ອງການອ້ອມຂ້າງເມືອງ ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານການພັດທະນາສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະ ສສຂ ປະຈຳເມືອງ ກໍຄືອຳນາດການປົກຄອງທ້ອງຖິ່ນ ແລະ ເພີ່ມທະວີການນຳພາ-ຊີ້ນຳຂອງຄະນະພັກ, ອຳນາດການປົກຄອງເມືອງ ຕໍ່ກັບການຈັດຕັ້ງການເຄື່ອນໄຫວວຽກງານຂອງຄະນະ ສສຂ ປະຈຳເມືອງຂວາ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ກອງປະຊຸມຄົບຄະນະ 3 ຄະນະກຳມະການ ສພຂ ຫລວງນ້ຳທາ




(ສພຊ) ວັນທີ 24 ມັງກອນ 2022 ທີ່ສະໂມສອນແຂວງຫລວງນ້ຳທາ, 3 ຄະນະກຳມະການຂອງສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ຊຸດທີ II ຄື: ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ), ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ (ຄສຜງ), ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຄຍປປ) ໄດ້ເປີດກອງປະຊຸມຄົບຄະນະປະຈຳປີ 2021 ແລະ ວາງທິດທາງແຜນການປະຈຳປີ 2022 ໂດຍການເປັນປະທານຮ່ວມຂອງທ່ານ ນາງ ເກສອນ ແສງຍະວົງ ປະທານ ຄວສຜ, ທ່ານ ຄຳພອນ ເຕີນຈະເລີນ ປະທານ ຄສຜງ ແລະ ທ່ານ ຈັນທະສຸລິນ ໝັ້ນປະດິດ ປະທານ ຄຍປປ; ເຂົ້າຮ່ວມມີທ່ານ ຄຳຟອງ ອິນມະນີ ປະທານ ສພຂ ຫລວງນ້ຳທາ; ມີສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ສອງກອງບັນຊາການແຂວງ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການປີ 2022 ຂອງທັງ 3 ຄະນະກຳມະການດັ່ງກ່າວ ແລະ ໄດ້ຮັບຟັງຮ່າງຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍກອງທຶນສັງຄົມສົງເຄາະ; ພ້ອມນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ສຸມສະຕິປັນຍາປະກອບຄຳຄິດເຫັນໃສ່ຮ່າງບົດສະສະຫລຸບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການປີ 2022 ຂອງ 3 ຄະນະກຳມະການ, ຮ່າງຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍກອງທຶນສັງຄົມສົງເຄາະ ຢ່າງກົງໄປກົງມາ, ມີບັນຍາກາດຟົດຟື້ນສົມຄວນ ເພື່ອເຮັດໃຫ້ຮ່າງບົດສະຫລຸບດັ່ງກ່າວມີຄຸນນະພາບ, ສາມາດນຳໄປຈັດຕັ້ງປະຕິບັດຕໍ່ໜ້າໃຫ້ໄດ້ຮັບຜົນດີ ແລະ ເຮັດໃຫ້ຮ່າງຂໍ້ຕົກລົງຂອງເຈົ້າແຂວງມີເນື້ອໃນຖືກຕ້ອງສົມບູນເພື່ອນຳເຂົ້າພິຈາລະນາກອງກອງປະຊຸມ ສພຂ.

(ວັນນີ ແຝງບົວພັນ)

# ລົງນາມບົດບັນທຶກການປະສານງານ ລະຫວ່າງ ຄຍປປ ກັບອົງການປົກປ້ອງກົດໝາຍຂອງແຂວງອຸດົມໄຊ



(ສພຊ) ຕອນເຊົ້າຂອງວັນຈັນທີ 14 ກຸມພາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ຈັດພິທີເຊັນບົດບັນທຶກການປະສານງານ ລະຫວ່າງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຄຍປປ) ສພຂ ອຸດົມໄຊ ກັບອົງການປົກປ້ອງກົດໝາຍຄື: ພະແນກຍຸຕິທຳແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານ ສພຂ ອຸດົມໄຊ ເຊິ່ງລົງນາມໃນພິທີຄັ້ງນີ້ ໂດຍທ່ານ ທອງຄານ ວັດສະດາກອນ ປະທານ ຄຍປປ ພ້ອມດ້ວຍບັນດາທ່ານຕາງໜ້າຈາກ 4 ພາກສ່ວນດັ່ງກ່າວ; ມີສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າຂະແໜງ ແລະ ວິຊາການຂະແໜງກ່ຽວຂ້ອງພາຍໃນ ສພຂ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພິຍານ.

ການເຊັນບົດບັນທຶກໃນຄັ້ງນີ້, ແມ່ນເພື່ອເປັນການຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງຮ່ວມລະຫວ່າງ ສພຂ ກັບ ອົງການປົກຄອງແຂວງ ສະບັບເລກທີ 70/ອຊ, ລົງວັນທີ 4 ກຸມພາ 2022; ເພື່ອເຮັດໃຫ້ການປະສານງານ ແລະ ການສະໜອງຂໍ້ມູນເຊິ່ງກັນແລະກັນ ມີຄວາມສະດວກ, ວ່ອງໄວທັນກັບເວລາ ໃນພິທີຄະນະຮັບຜິດຊອບໄດ້ຜ່ານບົດບັນທຶກດັ່ງກ່າວ ເຊິ່ງເນື້ອໃນບົດບັນທຶກ 4 ສະບັບປະກອບມີ 3 ໝວດ, 6 ມາດຕາ ໄດ້ກຳນົດຫລັກການ, ຂັ້ນຕອນ, ເນື້ອໃນ ແລະ ກົນໄກການປະສານງານລະຫວ່າງ ຄຍປປ ກັບອົງການປົກປ້ອງກົດໝາຍ ແນໃສ່ເຮັດໃຫ້ການປະຕິບັດພາລະບົດບາດ, ສິດໜ້າທີ່ຂອງແຕ່ລະພາກສ່ວນໃຫ້ສອດຄ່ອງກັບແນວທາງພັກ-ລັດ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

ຕອນທ້າຍພິທີ, ປະທານໄດ້ສະແດງຄວາມຊົມເຊີຍຕໍ່ຄະນະຮັບຜິຊອບຮ່າງບົດບັນທຶກໃນການກະກຽມບົດບັນທຶກການປະສານງານດັ່ງກ່າວ ແລະ ສິ່ງໃຫ້ອົງການກ່ຽວຂ້ອງປະກອບຄຳຄິດເຫັນໃສ່ເຮັດໃຫ້ບົດບັນທຶກດັ່ງກ່າວສົມບູນ ແລະ ໄດ້ຕົກລົງເຫັນດີເປັນເອກະພາບເຊັນບົດບັນທຶກນີ້ ແລະ ທ່ານໄດ້ເນັ້ນໜັກໃຫ້ອົງການກ່ຽວຂ້ອງນຳເອົາເນື້ອໃນບົດບັນທຶກໄປຈັດຕັ້ງເຊື່ອມຊຶມໃຫ້ແກ່ພະນັກງານ ແລະ ກຳລັງພາຍໃນກົມກອງຂອງຕົນໃຫ້ຮັບຮູ້, ເຂົ້າໃຈ ແລະ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ໃຫ້ປາກົດຜົນເປັນຈິງ.

(ແສງພອນ ອິນນະລົງ)

# ຄສຊ ເຂດ 7 ຖອດຖອນບົດຮຽນການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ

(ສພຊ) ເມື່ອບໍ່ດົນຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ, ຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ໄດ້ຈັດກອງປະຊຸມຖອດຖອນບົດຮຽນໃນການເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ພົບປະຜູ້ມີສິດເລືອກຕັ້ງ ທີ່ໄດ້ເຄື່ອນໄຫວໃນລະຫວ່າງວັນທີ 6-15 ກຸມພາ 2022 ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ປະທານ ຄສຊ ປະຈຳເຂດເລືອກຕັ້ງ, ມີບັນດາຄະນະ ສສຊ ປະຈຳເຂດເລືອກຕັ້ງ, ຄະນະເລຂາທິການສະພາປະຊາຊົນແຂວງ ພ້ອມດ້ວຍພະນັກງານວິຊາການເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານຮ່າງບົດສະຫລຸບຕີລາຄາຜົນສຳເລັດໃນການລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ຈາກເລຂາທິການສະພາປະຊາຊົນແຂວງ; ຈາກນັ້ນ, ບັນດາຜູ້ແທນກອງປະຊຸມໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນ ຕາມຄຳເຈາະຈີ້ມຂອງປະທານກອງປະຊຸມໃສ່ຮ່າງບົດສະຫລຸບດັ່ງກ່າວ ເພື່ອໃຫ້ເຫັນໄດ້ຜົນສຳເລັດດ້ານຕັ້ງໜ້າ, ດ້ານຄົງຄ້າງ ແລະ ບົດຮຽນຖອດຖອນໄດ້. ນອກນີ້, ກອງປະຊຸມຍັງໄດ້ຮັບຟັງ ແລະ ພ້ອມກັນປະກອບຄຳຄິດຄຳເຫັນໃສ່ຮ່າງຂໍ້ຕົກລົງຂອງປະທານ ຄສຊ ປະຈຳເຂດເລືອກຕັ້ງທີ 7 ວ່າດ້ວຍການແບ່ງວຽກງານໃຫ້ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ຮ່າງແຜນວຽກຈຸດສຸມ ປະຈຳປີ 2022 ຂອງ ຄສຊ ປະຈຳເຂດເລືອກຕັ້ງທີ 7 ຕື່ມອີກ.

ທັງນີ້, ກໍເພື່ອເປັນການສະຫລຸບຕີລາຄາຄືນກ່ຽວກັບການລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ເຫັນໄດ້ຜົນສຳເລັດດ້ານຕັ້ງໜ້າ, ດ້ານຄົງຄ້າງ, ບົດຮຽນຖອດຖອນໄດ້ ທັງເປັນການຄົ້ນຄວ້າ, ປຶກສາຫາລືກ່ຽວກັບການແບ່ງວຽກງານ ແລະ ແຜນວຽກຈຸດສຸມ ປະຈຳປີ 2022 ຂອງ ຄສຊ ປະຈຳເຂດເລືອກຕັ້ງທີ 7.

(ນີ່ຕູ່ ປະສິດທິພົງ)

# ສພຂ ເຊກອງ ສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ



(ສພຊ) ວັນທີ 21 ກຸມພາ 2022 ທີ່ສະໂມສອນສະພາປະຊາຊົນແຂວງ (ສພຂ) ເຊກອງ ໄດ້ຈັດກອງປະຊຸມສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ (ປີ 2021-2025) ໂດຍການເຂົ້າຮ່ວມເປັນປະທານຂອງທ່ານ ດົງເຜັດ ພະຍົນ ປະທານ ສພຂ ເຊກອງ ແລະ ທ່ານ ບຸນຫລາຍ ບຸດທິ ຫົວໜ້າຄະນະຈັດຕັ້ງແຂວງເຊກອງ; ມີບັນດາທ່ານ ຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ຄະນະຊີ້ນຳການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ພະນັກງານຫລັກແຫລ່ງ ແລະ ພະນັກງານ-ລັດຖະກອນ ສພຂ ເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານ ນາງ ຄຳໄພ ວິລະສານ ເລຂາທິການ ສພຂ ເຊກອງ ໄດ້ລາຍງານການຈັດຕັ້ງປະຕິບັດວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂອງ ສພຂ ເຊກອງ ໃນໄລຍະ 5 ປີຜ່ານມາ (2016-2020) ໂດຍລວມແມ່ນໄດ້ກຳນົດພະນັກງານເຂົ້າໃນຕຳແໜ່ງງານຢ່າງຈະແຈ້ງ ແລະ ແທດເໝາະກັບໜ້າວຽກ ໂດຍປະຕິບັດຕາມມາດຖານເງື່ອນໄຂທີ່ຂັ້ນເທິງກຳນົດໄວ້ ເປັນຕົ້ນແມ່ນໄດ້ຄົ້ນຄວ້າພະນັກງານໄປບຳລຸງກໍ່ສ້າງ ແລະ ກ່ອນການແຕ່ງຕັ້ງພະນັກງານດຳລົງຕຳແໜ່ງໃດໜຶ່ງແມ່ນໄດ້ຜ່ານການປະເມີນກ່ອນການດຳລົງຕຳແໜ່ງໃໝ່ ຄົ້ນຄວ້າເອົາພະນັກງານທີ່ນອນໃນແຜນກຳນົດກໍ່ສ້າງພະນັກງານນຳພາ-ຄຸ້ມຄອງ ແລະ ຂຶ້ນກັບໜ້າທີ່ວຽກງານທີ່ມີຄວາມຈຳເປັນ ພ້ອມນີ້ຈະມີການແຕ່ງຕັ້ງພະນັກງານດຳລົງຕຳແໜ່ງໃດໜຶ່ງ ຍັງຕ້ອງໄດ້ຜ່ານການປະເມີນທາບທາມສະເພາະກ່ອນການແຕ່ງຕັ້ງດຳລົງຕຳແໜ່ງໃໝ່ ແລະ ຍົກຍ້າຍໄປຮັບໜ້າທີ່ໃໝ່ ເຊິ່ງໄດ້ຊຸກຍູ້ພະນັກງານ-ລັດຖະກອນ ທີ່ນອນໃນແຜນກຳນົດສ້າງພະນັກງານນຳພາ-ຄຸ້ມຄອງ ໄປຍົກລະດັບຄວາມຮູ້ທາງດ້ານວິຊາສະເພາະ, ທິດສະດີ ແລະ ບຳລຸງພາສາຕ່າງປະເທດໄລຍະສັ້ນທັງພາຍໃນ ແລະ ຕ່າງປະເທດ 16 ທ່ານ ຍິງ 5 ທ່ານ ໃນນີ້, ຍົກລະດັບທາງດ້ານທິດສະດີ ຢູ່ປະເທດ ສສ.ຫວຽດນາມ 1 ທ່ານ ຍິງ 1 ທ່ານ; ພາຍໃນປະເທດ 6 ທ່ານ ຍິງ 2 ທ່ານ, ຂັ້ນສູງ 3 ທ່ານ ຍິງ 2 ທ່ານ, ຂັ້ນກາງ 2 ທ່ານ ແລະ ຂັ້ນຕົ້ນ 1 ທ່ານ; ຍົກລະດັບດ້ານວິຊາສະເພາະ ຊັ້ນປະລິນຍາຕີ ພາຍໃນປະເທດ 4 ທ່ານ; ບຳລຸງພາສາຫວຽດນາມ 3 ທ່ານ ແລະ ຮຽນກົດໝາຍ 45 ວັນ 2 ທ່ານ. ນອກຈາກນີ້, ຍັງໄດ້ບັນຈຸສັບຊ້ອນ-ແຕ່ງຕັ້ງພະນັກງານເຂົ້າໃນຕຳແໜ່ງງານ ບໍລິຫານປະເພດ 3 ຮອງເລຂາທິການ ສພຂ 3 ທ່ານ ຍິງ 1 ທ່ານ, ຕຳແໜ່ງບໍລິຫານປະເພດ 5 ຫົວໜ້າຂະແໜງ 10 ທ່ານ ຍິງ 2 ທ່ານ ແລະ ຕຳແໜ່ງບໍລິຫານປະເພດ 6 ຮອງຫົວໜ້າຂະແໜງ 9 ທ່ານ ຍິງ 3 ທ່ານ.

ກອງປະຊຸມຍັງໄດ້ຮັບຟັງກ່ຽວກັບຄຳສັ່ງແນະນຳຂອງຄະນະປະຈຳພັກແຂວງ ສະບັບເລກທີ 08/ຈພຂ, ລົງວັນທີ 12/2/2021 ວ່າດ້ວຍການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂັ້ນແຂວງ; ດຳລັດ ສະບັບເລກທີ 461/ລບ, ລົງວັນທີ 9 ຕຸລາ 2012 ວ່າດ້ວຍມາດຖານຕຳແໜ່ງບໍລິຫານຂອງພະນັກງານ; ແຈ້ງການແນະນຳຂອງຄະນະຈັດຕັ້ງແຂວງ ສະບັບເລກທີ 11/ຄຈຂ, ລົງວັນທີ 17/2/2021 ວ່າດ້ວຍການຈັດຕັ້ງປະຕິບັດວຽກງານການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ໄລຍະ 5 ປີ (2021-2025); ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 030/ກມສພ, ລົງວັນທີ 3 ມັງກອນ 2018 ວ່າດ້ວຍມາດຖານຂອງພະນັກງານນຳ-ຄຸ້ມຄອງ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ.

ໂອກາດດັ່ງກ່າວ, ທ່ານ ບຸນຫລາຍ ບຸດທິ ຫົວໜ້າຄະນະຈັດຕັ້ງແຂວງ ໄດ້ມີຄຳເຫັນຊີ້ນຳຕໍ່ກອງປະຊຸມ ເຊິ່ງທ່ານໄດ້ສະແດງໃຫ້ເຫັນການສ້າງແຜນກຳນົດພະນັກງານ ເປັນການກະກຽມບຸກຄະລາກອນໃນລັກສະນະເປີດກວ້າງ ເພື່ອໃຫ້ມີແຫລ່ງເລືອກເຟັ້ນພະນັກງານນຳພາ-ຄຸ້ມຄອງຕອບສະໜອງທາງດ້ານຈຳນວນ, ຄຸນນະພາບ ແລະ ໂຄງປະກອບຕາມຄວາມຮຽກຮ້ອງຕ້ອງການຂອງບັນດາຕຳແໜ່ງນຳພາ-ຄຸ້ມຄອງແຕ່ລະຂັ້ນ, ແຕ່ລະຂະແໜງການໃນລະບົບການເມືອງ ເພື່ອຈັດຕັ້ງແບບແຜນການພັດທະນາເສດຖະກິດ-ສັງຄົມ ແລະ ການຫັນເປັນອຸດສະຫະກຳ ແລະ ທັນສະໄໝເທື່ອລະກ້າວ ແນໃສ່ປົກປັກຮັກສາ ແລະ ສ້າງສາປະເທດຊາດຕາມຈຸດໝາຍສັງຄົມນິຍົມ. ການສ້າງແຜນກຳນົດພະນັກງານນຳ-ຄຸ້ມຄອງເປັນວຽກງານໜຶ່ງທີ່ສຳຄັນພື້ນຖານຂອງວຽກງານພະນັກງານ, ຮັບປະກັນການຫັນວຽກພະນັກງານດຳເນີນຕາມລະບຽບການ, ແບບແຜນ ເພື່ອຕອບສະໜອງໜ້າທີ່ການເມືອງຂອງພັກ-ລັດໃນສະເພາະໜ້າ ແລະ ຍາວນານ ເປັນການຫັນຍຸດທະສາດກ່ຽວກັບວຽກງານເປັນອັນລະອຽດ, ສ້າງໂຄງການສັງລວມພື້ນຖານໃຫ້ແກ່ການສ້າງແຜນກໍ່ສ້າງ-ບຳລຸງ, ຄາດຄະເນສັບຊ້ອນ ແລະ ຈັດວາງພະນັກງານຢ່າງສົມເຫດສົມຜົນ.

ພ້ອມນີ້, ທ່ານຍັງໄດ້ເນັ້ນໜັກໃຫ້ບັນດາສະຫາຍ ຄະນະພັກແຕ່ລະຂັ້ນ, ພະນັກງານ-ລັດຖະກອນ ຕາມຂອບເຂດສິດຂອງຕົນ ຖືກົດລະບຽບຫລັກການເປັນເຄື່ອງມືໃນການຄົ້ນຄວ້າພິຈາລະນາ, ປະຕິບັດຕາມຫລັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ, ຄົ້ນຄວ້າເປົ້າໝາຍເຂົ້າໃນແຜນກຳນົດພະນັກງານເປັນໝູ່ຄະນະ ແລະ ຕົກລົງຕາມສຽງສ່ວນຫລາຍ ຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ, ພາວະວິໄສຮອບດ້ານ, ຍຸຕິທຳ ໂດຍຄຳນຶງເຖິງໂຄງປະກອບເພດ, ເຜົ່າ ແລະ ເລັ່ງໃສ່ພະນັກງານໜຸ່ມໃຫ້ກວມອັດຕາສ່ວນຫລາຍ.

(ນັກຂ່າວ ສພຂ ເຊກອງ)



# ສະຫລຸບວຽກງານ ປະຈຳປີ 2021 ຂອງຄະນະເລຂາທິການ ສພຂ ອັດຕະປື



(ສພຊ) ກອງປະຊຸມສະຫລຸບຕີລາຄາການຈັດຕັ້ງປະຕິບັດວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງ (ສພຂ) ອັດຕະປື ປະຈຳປີ 2021 ໄດ້ຈັດຂຶ້ນໃນວັນທີ 18 ກຸມພາຜ່ານມາ, ທີ່ຫ້ອງປະຊຸມ ສພຂອັດຕະປື ພາຍໃຕ້ການເປັນປະທານຂອງທ່ານ ນາງ ແສງອາລຸນ ວົງສາທິການ ເລຂາທິການ ສພຂ ອັດຕະປື ໂດຍການເຂົ້າຮ່ວມຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານ ສພຂ, ມີບັນດາທ່ານ ຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ-ວິຊາການ ພາຍໃນ ສພຂ ເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານ ແສງປະດິດ ສຸດນາມສຸລິນ ຮອງເລຂາທິການ ໄດ້ຂຶ້ນຜ່ານບົດລາຍງານ ການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ປະຈຳປີ 2021 ແລະ ທິດທາງແຜນການປະຈຳປີ 2022 ຂອງຄະນະເລຂາທິການ ສພຂ ເຊິ່ງໄດ້ຍົກໃຫ້ເຫັນຜົນງານດ້ານດີທີ່ພົ້ນເດັ່ນ ເປັນຕົ້ນແມ່ນຖືເອົາວຽກງານການເມືອງ-ແນວຄິດ ເປັນວຽກສຳຄັນ ແລະ ເອົາໃຈໃສ່ໃນສຶກສາອົບຮົມ ໃຫ້ແກ່ຖັນແຖວພະນັກງານ-ລັດຖະກອນ ຢ່າງປົກກະຕິຕໍ່ເນື່ອງດ້ວຍຫລາຍຮູບການເຊັ່ນຜ່ານກອງປະຊຸມປະຈຳເດືອນຂອງຄະນະເລຂາທິການ, ກອງປະຊຸມບັນດາອົງການຈັດຕັ້ງມະຫາຊົນ, ປາຖະກະຖາວັນສຳຄັນຕ່າງໆ ຂອງພັກ-ຂອງຊາດ, ເປັນເຈົ້າການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃນການເປັນເສນາທິການໃຫ້ ສພຂ, ຄະນະປະຈຳ ສພຂ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ໃນການຄົ້ນຄ້ວາ-ສັງລວມເນື້ອໃນ; ຄຸ້ມຄອງວຽກງານບໍລິຫານ-ການເງິນ, ວຽກງານຈັດຕັ້ງ-ກວດກາ, ວຽກງານຂໍ້ມູນຂ່າວສານ ແລະ ວຽກງານອື່ນໆ ຕາມການມອບໝາຍຂອງຄະນະປະຈຳ ສພຂ.

ຈາກນັ້ນ, ກອງປະຊຸມຍັງໄດ້ຮັບຟັງບົດສະຫລຸບຕີລາຄາການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II. ພ້ອມກັນນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ແລກປ່ຽນປະກອບຄຳຄິດຄຳເຫັນ ດ້ານຂໍ້ຄົງຄ້າງ ເພື່ອທີ່ຈະຕ້ອງໄດ້ແກ້ໄຂໃນຕໍ່ໜ້າ.

ຕອນທ້າຍ, ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ຄະນະເລຂາທິການ ທີ່ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ວຽກງານ ຕາມພາລະບົດບາດ ແລະ ສິດ, ໜ້າທີ່ຕາມທີ່ກຳນົດໄວ້ໃນກົດໝາຍ ເຊິ່ງສາມາດຍາດໄດ້ຜົນສຳເລັດໃນຫລາຍໆດ້ານ, ຄຽງຄູ່ກັບຜົນສຳເລັດຍັງຈະຕ້ອງໄດ້ເອົາໃຈໃສ່ສືບຕໍ່ເພີ່ມທະວີ ວຽກງານບຳລຸງຍົກລະດັບສ້າງ ແລະ ສຶກສາອົບຮົມນຳພາການເມືອງ-ແນວຄິດ ໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນຂອງ ສພຂ ໃຫ້ຕໍ່ເນື່ອງ, ທົ່ວເຖິງ ແລະ ທັນການ; ປັບປຸງກົງຈັກການຈັດຕັ້ງ, ແບບແຜນວິທີເຮັດວຽກ, ມີການຕິດຕາມກວດກາ, ມີການປະເມີນຜົນ ງານຍ້ອງຍໍ້ ແລະ ເຮັດເປັນປົກກະຕິ, ເພື່ອສ້າງແຮງຈູງໃຈ ແລະ ຕິຖອຍແນວຄິດທໍ້ຖອຍ ໃນຖັນແຖວພະນັກງານ-ລັດຖະກອນ. ສາມາດຮັບປະກັນໃຫ້ການປະຕິບັດວຽກງານທຸກດ້ານດຳເນີນໄປຢ່າງຖືກຕ້ອງ, ໂປ່ງໃສ ແລະ ມີຜົນສຳເລັດເປັນຢ່າງດີ; ສົ່ງເສີມຄວາມເປັນເຈົ້າການ ແລະ ມີຫົວຄິດປະດິດສ້າງຂອງສະມາຊິກພັກ, ພະນັກງານ-ລັດຖະກອນ, ເພື່ອປະກອບສ່ວນອັນສຳຄັນ ໃນການເຕົ້າໂຮມຄວາມສາມັກຄີ, ເປັນເຈົ້າການເຂົ້າຮ່ວມທຸກກິດຈະກຳ ແລະ ຂະບວນການຕ່າງໆຂອງ ສພຂ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17 ໃນແຕ່ລະໄລຍະ; ປັບປຸງ ແລະ ຍົກລະດັບການເປັນເສນາທິການຂອງຄະນະເລຂາທິການ ສພຂ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກົດໝາຍໄດ້ກຳນົດໄວ້ ພ້ອມທັງຮັບປະກັນຄຸນນະພາບຂອງສະມາຊິກພັກ ແລະ ຍົກສູງຄວາມສາມາດຂອງພະນັກງານ-ລັດຖະກອນ ໃນການປະຕິບັດພາລະບົດບາດ ເປັນເສນາທິການທີ່ດີ, ການປະສານງານທີ່ດີ, ບໍລິການຮັບໃຊ້ໃຫ້ດີ, ໃຫ້ເກັ່ງ ແລະ ມີວິໄນ; ພ້ອມທັງຫັນເປັນຊ່ຽວຊານ ແລະ ທັນສະໄໝ, ວ່ອງໄວຂຶ້ນເທື່ອລະກ້າວ.

(ວິນັດ)




## ເບີໂທສຸກເສີນ

❑ **ຕຳຫລວດ**

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນ ແລະຕ້ານການຄ້າມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287
- ກົມຄຸ້ມຄອງຄົນຕ່າງປະເທດ 021 212520
- ສາຍດ່ວນ 1191

108 ສາລະ

# ບົດບາດແມ່ຍິງໃນການພັດທະນາ

# ຜູ້ອື່ນ

ບົດບາດຂອງແມ່ຍິງໃນການພັດທະນາ ກ່ຽວພັນໂດຍກົງກັບເປົ້າໝາຍຂອງການພັດທະນາເສດຖະກິດ ແລະ ສັງຄົມ ຢ່າງກວ້າງຂວາງ ແລະ ເປັນພື້ນຖານ ເພື່ອພັດທະນາທຸກໆສັງຄົມ; ການພັດທະນາ ໝາຍເຖິງການພັດທະນາທັງໝົດ ລວມທັງການພັດທະນາທາງດ້ານການເມືອງ, ເສດຖະກິດ ແລະ ດ້ານອື່ນໆຂອງຊີວິດມະນຸດ ຄວນມີການຊຸກນຳໃຫ້ຈັດຫາວິທີການຕ່າງໆເພື່ອໃຫ້ແມ່ຍິງ ໂດຍສະເພາະແມ່ຍິງທີ່ຍາກຈົນ ຫລື ຂາດແຄນມີຄວາມສາມາດຮຽກຮ້ອງ, ໄດ້ຮັບຜົນສຳເລັດ, ນຳໃຊ້ ແລະ ອ້າງສິດ ກ່ຽວກັບຄວາມສະເໝີພາບໃນການກຳໄອກາດດ້ານຕ່າງໆ ໃຫ້ຫລາຍຂຶ້ນເລື້ອຍໆ ເວົ້າລວມຍິ່ງມີແມ່ຍິງທີ່ສາມາດເຂົ້າຮ່ວມໃນກິດຈະການຂອງສັງຄົມໄດ້ໃນຖານະເປັນຕົວແທນເອກະລາດທາງດ້ານກົດໝາຍ ຍິ່ງຈະເປັນການປະກອບສ່ວນໃຫ້ຄວາມຮັບຮູ້ຄວາມຮັບຮູ້ກ່ຽວກັບສິດສະເໝີພາບຂອງແມ່ຍິງໃນສັງຄົມໄດ້ຮັບການປະຕິບັດໃນພາກຕົວຈິງເປັນຂັ້ນໆໄປ ການພັດທະນາຕ້ອງມີມິຕິທາງສິນລະທຳປະກອບພ້ອມ ເພື່ອຮັບປະກັນວ່າມີຄວາມຍຸຕິທຳຢ່າງແທ້ຈິງ, ຕອບສະໜອງຕໍ່ຄວາມຕ້ອງການ, ສິດທິຂອງບຸກຄົນ ຄວນນຳເອົາວິທະຍາສາດ ແລະ ເຕັກໂນໂລຊີມາໝູນໃຊ້ພາຍໃນຂອບເຂດເສດຖະກິດ ແລະ ສັງຄົມ ທີ່ຮັບປະກັນໄດ້ວ່າສິ່ງແວດລ້ອມຈະມີຄວາມປອດໄພສຳລັບທຸກຮູບແບບການດຳລົງຊີວິດທີ່ມີຢູ່ໃນໂລກຂອງພວກເຮົາ.

ການສົ່ງເສີມສິດຂອງແມ່ຍິງຈະສາມາດດຳເນີນໄດ້ຢ່າງເຕັມສ່ວນ ແລະ ມີປະສິດທິພາບ ໃນພາວະທີ່ມີສັນຕິພາບ ແລະ ຄວາມໝັ້ນຄົງສາກົນ ເຊິ່ງໃນນັ້ນສາຍພົວພັນລະຫວ່າງປະເທດຕ່າງໆ ຈະສະແດງອອກບົນພື້ນຖານການເຄົາລົບສິດທິຕາມກົດໝາຍຂອງທຸກປະເທດ ບໍ່ວ່າຈະເປັນປະເທດນ້ອຍ ຫລື ໃຫຍ່ ແລະ ບໍ່ວ່າເຊື້ອຊາດໃດ ທີ່ມີການປະຕິບັດສິດໃນການກຳນົດໂຊກຊາຕາຂອງຕົນເອງ ກໍຄືເອກະລາດ ອະທິປະໄຕ ຜືນແຜ່ນດິນອັນຄົບຖ້ວນ ແລະ ສິດໃນການມີຊີວິດຢູ່ໃນສັນຕິພາບ ພາຍໃນເຂດແດນແຫ່ງຊາດຂອງຕົນ.

ການໃຫ້ແມ່ຍິງປະກອບສ່ວນເຂົ້າໃນການພັດທະນາ ແລະ ເສີມສ້າງສັນຕິພາບ ກໍຄືການສົ່ງເສີມໃຫ້ແມ່ຍິງມີຄວາມສະເໝີພາບກັບເພດຊາຍນັ້ນຕ້ອງນຳໃຊ້ຍຸດທະສາດ ແລະ ມາດຕະການຕ່າງໆ ທີ່ກ່ຽວພັນເຖິງຫລາຍດ້ານເປັນທິດທາງໃຫ້ປະຊາຊົນປະຕິບັດ; ຍຸດທະສາດເຫລົ່ານີ້ຕ້ອງອີງໃສ່ການພັດທະນາ ແລະ ການນຳໃຊ້ຊັບພະຍາກອນມະນຸດ ໃຫ້ນັບມື້ສູງຂຶ້ນສູ່ລະດັບສູງ ໂດຍແນໃສ່ສົ່ງເສີມຄວາມສະເໝີພາບ ແລະ ການພັດທະນາສັງຄົມ ແລະ ກຸ່ມຄົນຕ່າງໆຢ່າງຕໍ່ເນື່ອງ.

ຄັດຈາກ: ສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ປີ 1998.



ສຸກສະບາຍຫາຍໂຣຄ

# ປະໂຫຍດ ແລະ ໂທດ ຂອງການກິນສົ້ມ

# ສາວແອ່ນ



ອັນຕະລາຍຈາກການກິນສົ້ມ ເມື່ອປຽບທຽບໃສ່ອັນຕະລາຍຈາກການກິນຫວານ ແລະ ອັນຕະລາຍຈາກການກິນເຄັມ ຖືວ່າບໍ່ຮ້າຍແຮງຫລາຍປານໃດ ແຕ່ຖ້າກິນສົ້ມຫລາຍເກີນໄປກໍບໍ່ດີຕໍ່ຮ່າງກາຍເຊັ່ນດຽວກັນ; ຄວາມສົ້ມມີສອງປະເພດຄື: ຄວາມສົ້ມຈາກການສັງເຄາະ ແລະ ຄວາມສົ້ມຈາກຜັກ ແລະ ໝາກໄມ້.

- **ຄວາມສົ້ມຈາກການສັງເຄາະ:** ໃນນ້ຳສົ້ມສາຍຊູມີສ່ວນປະກອບສຳຄັນແມ່ນ Glacial Acetic Acid ເຊິ່ງເປັນສານທີ່ກໍ່ໃຫ້ເກີດຄວາມສົ້ມ ຫລື ເອີ້ນວ່າ "ກົດຊີຕິກ" ໃຫ້ຄວາມສົ້ມແທນໝາກນາວ ຖ້າກິນໃນປະລິມານເລັກນ້ອຍກໍບໍ່ເປັນຫຍັງ ແຕ່ຖ້າກິນປະລິມານຫລາຍ ຈະພົບວ່າມີຜົນອັນຕະລາຍຕໍ່ຮ່າງກາຍ.

- ຄວາມສົ້ມຈາກຜັກ ແລະ ໝາກໄມ້ ແມ່ນຄວາມສົ້ມຈາກໝາກໄມ້ຕ່າງໆເຊັ່ນ: ໝາກນາວ, ໝາກມ່ວງ, ໝາກຂາມ, ໝາກຍົມ, ໝາກນັດ... ຈະບໍ່ເປັນອັນຕະລາຍຫລາຍ.

+ ປະໂຫຍດຂອງການກິນສົ້ມ.

- ແກ້ໄອ-ເຈັບຄໍ ໂດຍໃຊ້ໝາກນາວ 3 ໜ່ວຍປະສົມກັບນ້ຳເຜິ້ງ 1 ບ່ວງ ຈະຊ່ວຍແກ້ອາການໄອ ແລະ ເຈັບຄໍໄດ້ດີ ເພາະສາມາດຊ່ວຍບັນເທົາອາການໄອ ແລະ ນ້ຳເຜິ້ງບັນເທົາອາການເຈັບຄໍໄດ້.

- ປ້ອງກັນການເປັນຫວັດ ໝາກນາວອຸດົມໄປດ້ວຍວິຕາມິນຊີ ແລະ ຖ້າກິນເປັນປະຈຳຈະຊ່ວຍບັນເທົາ ຫລື ປ້ອງກັນການເປັນຫວັດໄດ້.

- ກະຕຸ້ນການຍ່ອຍອາຫານ

-ຊ່ວຍບັນເທົາອາການຫິວນ້ຳ

**+ ອັນຕະລາຍຂອງການກິນສົ້ມ.**

- ທຳລາຍແຂ້ວ ເພາະກົດທີ່ມີໃນອາຫານສົ້ມຈະໄປທຳຮ້າຍແຂ້ວເທື່ອລະນ້ອຍ ເຮັດໃຫ້ແຂ້ວຫ້ຽນ ທັງແຂ້ວເທິງ ແລະ ແຂ້ວລຸ່ມ ເຮັດໃຫ້ເກີດອາການເຂັດແຂ້ວ ແລະ ເຮັດໃຫ້ການອັດແຂ້ວມີຄວາມຫຍຸ້ງຍາກ ເພາະມີຕ້ອງໃຊ້ເວລາ ແລະ ຄ່າໃຊ້ຈ່າຍຫລາຍ.

- ຖອກທ້ອງ: ການກິນອາຫານທີ່ມີລົດຊາດສົ້ມຫລາຍ ມັກຈະເຮັດໃຫ້ຖອກທ້ອງ, ຮ້ອນໃນ ແລະ ລະບົບນ້ຳເຫລືອງໃນຮ່າງກາຍມີບັນຫາ ຈຶ່ງເຮັດບາດແຜນານຫາຍດີ.

+ ກະດູກຜ່ອຍ: ຄວາມສົ້ມທີ່ໄດ້ຈາກນ້ຳສົ້ມສາຍຊູ ເຖິງວ່າມັນຈະຊ່ວຍກຳຈັດກິ່ນຄາວປາ ແລະ ຫລຸດເຊື້ອແບັກທີເລຍໃນອາຫານ ແຕ່ຖ້າກິນຫລາຍເກີນໄປ ຈະເປັນອັນຕະລາຍຕໍ່ກະດູກໄດ້.

www.sanook.com

ສາລາກະວີ

# ສຽງສະອື້ນຈາກແມ່

# ໂດຍ: ລູກທາດສາມປາງ

❖ ລູກຫລາຍຄືນແມ່ລ້ຽງ
ພຽນພ່ຳແພງຖະໜອມ
ແມ່ຮັກຫອມສະເໜີຕາ
ຢູ່ຄອຍປະຄອງເຈົ້າ
ຍາມລູກເຫງົາຫິວໄຫ້
ກັງວົນໃຈແມ່ເປັນຫ່ວງ
ລູກປຽບດວງພະເນດເນື້ອ
ສອງກ້ຳໜ່ອຍຕາ...ແມ່ນາ!

❖ ພາລະໜັກໜ່ວງນ້າວ
ເຫທັ່ງໂຫມມາ
ເຝົ້າເບິ່ງແຍງບຸດຕາ
ເມື່ອຍາມຍັງນ້ອຍ
ແມ່ບໍ່ພອຍພາງໜ້າ
ທາລະກາລູກອ່ອນ
ນ້ຳນົມຫວານຕ່ອນຊື່ນ
ປາປ້ອນອີ່ນອອຍ

❖ ຍາມລູກຫງອຍຫງ່ວມເສົ້າ
ຄຽງອຸ່ນປະໂລມຂວັນ
ຍາມລູກຄວນຄາງຂົມ
ແມ່ຕົມຕາມແຄ້ນ
ຍາມລູກແຄນເຄືອງໄຂ້
ຫວັດໄອເປັນປ່ວຍ
ແມ່ຫົນຫວຍກວ່າເຈົ້າ
ຫລາຍເທົ່າທັ່ງທວງ...ລູກເອີຍ!

❖ ແມ່ຮັກຫວງຫ່ວງແກ້ວ
ແນວຫໍ່ຊີວາວັນ
ແມ່ບໍ່ຫັນເຫເຫີນ
ລ່ວງເກີນໄກເຈົ້າ
ເອົາຊີວັງປະຄອງຕຸ້ມ
ຂວັນແພງແກ້ວແມ່
ຄອຍດູແລລ່ຳລ້ຽງ
ສະເໜີໜ້າພ່ຳຕາ

❖ ຍຸງບິນມາແມ່ປ້ອງ
ມືໄລ່ຕົບໜີ
ມົດບໍ່ມີມາຕອມ
ແມ່ຊອມແຊມໃກ້
ຊຸມໝູ່ແມງໄຣຮົ້ນ
ເຫີນໜີບິນຜ່າຍ
ແມ່ຄຽງກາຍນັ່ງເຝົ້າ
ອອຍເວົ້າອ່ອນຫວານ

❖ ຫລາຍປີນານໃຫຍ່ກ້າວ
ເກີນແກ່ນຈະເລີນໄວ
ແມ່ຫ່ວງໄຍຍັງເດີມ
ສົ່ງເສີມຮຽນຮູ້
ຫາເງິນຊູໜູນເຈົ້າ
ຮຽນສູງສົມໄຝ່
ຫວັງໄດ້ພາເພິ່ງຊື່ນ
ຍາມເຖົ້າແກ່ຊະລາ...ນີ້ແລ້ວ!

❖ ເງິນຄວ່າຫາສົ່ງໃຫ້
ຂາຍໄກ່ໂຮມແຮ
ແມ່ສູ້ທົນແພງອອມ
ຫໍ່ໂຫມທອມໄວ້
ເດີນດັ້ນແດນໄກໃກ້
ຄອນກະບຸງຫາບກະຕ່າ
ຫາເງິນຝົນຜ່າຮ້ອນ
ໂຮມທ້ອນສົ່ງເຖິງ

❖ ເຫິງນານເກີນຮອດບັ້ນ
ລູກຮ່ຳຮຽນຈົບ
ແມ່ພົບພານຄວາມທຸກ
ອັ່ງອຸກອົບເອົ້າ
ອະນິດຈາຄວາມເສົ້າ
ມືນເມົາມ້ອຍມົ່ງ
ຄົງຮ່າງເພຍອ່ອນລ້າ
ຜະຫວາຮ້ອນຮ່ຳຮອນ...ແມ່ເດ

❖ ລູກຖ່າຍຖອນບ່າຍບ້ຽວ
ປະປ່ຽວພອຍໄກ
ໄດ້ການງານເງິນສູງ
ດຸ່ງລາເລີຍແລ້ວ
ລືມຫໍ່ແນວລົງໄດ້
ເວໄວເບນບ່ຽງ
ສຽງແມ່ຄວນນັ່ງສະອື້ນ
ຝືນກັ້ນອັ່ງລະທົມ

❖ ປະແມ່ຂົມຂື່ນແຄ້ນ
ລະກຳແກ່ນຊວງໃນ
ນ້ຳຕາໄຫລລົນນອງ
ຫລັ່ງລົງຮຳແກ້ມ
ແນມຫາທອງຄຳແກ້ວ
ສາຍໃຈລູກແມ່
ລູກຊ່າງແປປ່ຽນປີ້ນ
ລືມສິ້ນບໍ່ອ່າວຫາ...ແມ່ນໍ

❖ ດຽວນີ້...ແມ່ໂຮຍແຮງອ່ອນລ້າ
ຫລັງກົ່ງຜົມຂາວ
ເຖົ້າຊະລານອນໂຊມ
ຈົ່ມນຳຄອຍມື້
ຫລືລືມຄຸນເຄີຍລ້ຽງ
ຫາຍສູນສ້ຽງເປົ່າ
ຕາແມ່ມົວມືດເມົ້າ
ເງົາແຈ້ງເບິ່ງບໍ່ເຫັນ...ລູກເອີຍ!

❖ ວັນເວັນຄືນລ່ວງຂ້າມ
ໝູນປ່ຽນວຽນໄປ
ໃຈໝົ່ນໝອງມືນຊາ
ຫລ່າເຫລືອງນອນແລ້ງ
ກາຍອ່ອນເພຍຜອມແຫ້ງ
ບຸດຕາແພງລູກບໍ່ຮ່ຳ
ປະແມ່ຄອຍລ່ຳຄ້ອຍ
ຫາຍຈ້ອຍບໍ່ຫ່ວງນຳ...ແມ່ນໍ!

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 75 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 26 ທັນວາ 2019

## ກົດໝາຍ
## ວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍ ຂອງວິສາຫະກິດ (ສະບັບປັບປຸງ)

### ພາກທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຟື້ນຟູ ແລະ ການລົ້ມລະລາຍ ຂອງວິສາຫະກິດ ເພື່ອແກ້ໄຂວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນສະພາ ວະລົ້ມລະລາຍ ໃຫ້ມີຄວາມເປັນເອກະພາບ, ຖືກຕ້ອງ ແລະ ວ່ອງໄວ, ຮັບປະກັນປົກປ້ອງຜົນປະໂຫຍດອັນຊອບທຳຂອງເຈົ້າໜີ້, ວິສາຫະກິດລູກໜີ້ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ, ສ້າງຄວາມເຊື່ອໝັ້ນແກ່ລະບົບສິນເຊື່ອ ແນໃສ່ຮັກສາຄວາມໝັ້ນຄົງຂອງລະບົບເສດຖະກິດ, ສ້າງເງື່ອນໄຂແກ່ການດຳເນີນທຸລະກິດ ແລະ ການລົງທຶນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 (ໃໝ່) ການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ**

ການຟື້ນຟູວິສາຫະກິດ ແມ່ນການແກ້ໄຂວິສາຫະກິດທີ່ກຳລັງປະສົບຄວາມຫຍຸ້ງຍາກທາງດ້ານການເງິນ ຊຶ່ງບໍ່ສາມາດຊຳລະໜີ້ສິນ ໂດຍມີການຮ້ອງຂໍຂອງວິສາຫະກິດລູກໜີ້ ເພື່ອໃຫ້ໂອກາດສືບຕໍ່ດຳເນີນທຸລະກິດຂອງຕົນ ຕາມການຕົກລົງຂອງກອງປະຊຸມເຈົ້າໜີ້ ຊຶ່ງສານໄດ້ຮັບຮອງເອົາ.

ການລົ້ມລະລາຍຂອງວິສາຫະກິດ ແມ່ນການແກ້ໄຂວິສາຫະກິດທີ່ກຳລັງປະສົບຄວາມຫຍຸ້ງຍາກທາງດ້ານການເງິນ ຊຶ່ງບໍ່ສາມາດຊຳລະໜີ້ສິນ ເມື່ອເຖິງກຳນົດເວລາ ໂດຍມີການຮ້ອງຂໍຂອງວິສາຫະກິດ ຫຼື ຮ້ອງຟ້ອງຂອງເຈົ້າໜີ້ ເພື່ອໃຫ້ສານຕັດສິນລົ້ມລະລາຍ.

**ມາດຕາ 3 (ໃໝ່) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ວິສາຫະກິດ ໝາຍເຖິງ ວິສາຫະກິດສ່ວນບຸກຄົນ, ວິສາຫະກິດຮຸ້ນສ່ວນ, ບໍລິສັດຈຳກັດ, ບໍ ລິສັດມະຫາຊົນ ແລະ ວິສາຫະກິດຂອງລັດ ລວມທັງສະຫະກອນ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ;

2. ວິສາຫະກິດຂະໜາດນ້ອຍ ໝາຍເຖິງ ຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນ ຊຶ່ງໄດ້ຈັດແບ່ງຕາມຂະແໜງທຸລະກິດ ໂດຍມີຈຳນວນແຮງງານ, ມູນຄ່າຊັບສິນ ຫຼື ລາຍຮັບທຸລະກິດປະຈຳປີ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;

3. ຈຸນລະວິສາຫະກິດ ໝາຍເຖິງ ວິສາຫະກິດຂະໜາດນ້ອຍສຸດຂອງຂະແໜງການຜະລິດ, ການຄ້າ ແລະ ການບໍລິການ ໂດຍມີແຮງງານ, ມູນຄ່າຊັບສິນ ຫຼື ລາຍຮັບທຸລະກິດປະຈຳປີ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;

4. ວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ ໝາຍເຖິງ ວິສາຫະກິດທີ່ກຳລັງປະສົບຄວາມຫຍຸ້ງ ຍາກທາງດ້ານການເງິນ ຊຶ່ງບໍ່ສາມາດຊຳລະໜີ້ສິນຂອງຕົນ ເມື່ອເຖິງກຳນົດເວລາ;

5. ວິສາຫະກິດທີ່ໃກ້ຈະຢູ່ໃນສະພາວະລົ້ມລະລາຍ ໝາຍເຖິງ ວິສາຫະກິດທີ່ຍັງບໍ່ທັນຢູ່ໃນສະ ພາວະລົ້ມລະລາຍ ແຕ່ວິສາຫະກິດດັ່ງກ່າວ ຮູ້ວ່າຕົນມີຄວາມຫຍຸ້ງຍາກທາງດ້ານການເງິນ ຈະບໍ່ສາມາດໃຊ້ແທນໜີ້ສິນ ແລະ ຈະຢູ່ໃນສະພາວະລົ້ມລະລາຍໃນອະນາຄົດອັນໃກ້;

6. ວິສາຫະກິດລູກໜີ້ ໝາຍເຖິງ ວິສາຫະກິດ ທີ່ຖືກຮ້ອງຟ້ອງ ຫຼື ຮ້ອງຂໍດ້ວຍຕົນເອງ ໃຫ້ສານພິຈາລະນາການຟື້ນຟູ ຫຼື ການລົ້ມລະລາຍ;

7. ລູກໜີ້ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພັນທະຊຳລະໜີ້ດ້ວຍ ເງິນ, ຊັບສິ່ງຂອງ ຫຼື ພັນທະອື່ນ ໃຫ້ແກ່ເຈົ້າໜີ້;

8. ເຈົ້າໜີ້ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດທວງໃຫ້ລູກໜີ້ ຊຳລະໜີ້ ຫຼື ປະຕິບັດພັນທະອື່ນໃດໜຶ່ງ. ເຈົ້າໜີ້ ປະກອບດ້ວຍເຈົ້າໜີ້ທີ່ມີການຄ້ຳປະກັນ ແລະ ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ;

9. ເຈົ້າໜີ້ທີ່ມີການຄ້ຳປະກັນ ໝາຍເຖິງ ຜູ້ທີ່ມີສິດທວງ ຊຶ່ງສິດທວງດັ່ງກ່າວ ໄດ້ຮັບການຄ້ຳປະກັນການໃຊ້ແທນໜີ້ສິນ ດ້ວຍຫຼັກຊັບຄ້ຳປະກັນ ຫຼື ຄ້ຳປະກັນດ້ວຍຮູບການອື່ນ;

10. ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ ໝາຍເຖິງ ຜູ້ທີ່ມີສິດທວງ ແຕ່ສິດທວງດັ່ງກ່າວ ບໍ່ໄດ້ຮັບການ ຄ້ຳປະກັນການຊຳລະໜີ້;

11. ໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ ໝາຍເຖິງ ເອກະສານທີ່ວິສາຫະກິດລູກໜີ້ ສ້າງຂຶ້ນໃນເວລາມີການຮ້ອງຟ້ອງ ຫຼື ຮ້ອງຂໍໃຫ້ສານພິຈາລະນາການຟື້ນຟູ ຫຼື ການລົ້ມລະລາຍຂອງວິສາຫະກິດ ເພື່ອອະທິບາຍ, ຊີ້ແຈງກ່ຽວກັບສະພາບການດຳເນີນທຸລະກິດ, ຊັບສິນ ແລະ ໜີ້ສິນຂອງວິສາຫະກິດຕົນ;

12. ສິດທວງ ໝາຍເຖິງ ສິດຂອງຝ່າຍໜຶ່ງ ຊຶ່ງຮຽກຮ້ອງໃຫ້ອີກຝ່າຍໜຶ່ງ ປະຕິບັດພັນທະຂອງຕົນ ຕາມສັນຍາ ຫຼື ກົດໝາຍ;

13. ການຄອບຄອງໂດຍວິສາຫະກິດລູກໜີ້ (Debtor in Possession-DIP) ໝາຍເຖິງ ວິສາຫະກິດລູກໜີ້ ທີ່ສືບຕໍ່ບໍລິຫານວິສາຫະກິດຂອງຕົນ ຕາມການອະນຸຍາດຂອງສານ ບົນພື້ນຖານການເຫັນດີຂອງກອງປະຊຸມເຈົ້າໜີ້ ແຕ່ຢູ່ພາຍໃຕ້ການຄວບຄຸມ ແລະ ຄຸ້ມຄອງຂອງຜູ້ຄວບຄຸມຊັບສິນ;

14. ການລົ້ມລະລາຍຂ້າມແດນ ໝາຍເຖິງ ການດຳເນີນຄະດີລົ້ມລະລາຍຕໍ່ວິສາຫະກິດຢູ່ປະ ເທດໜຶ່ງ ແຕ່ວິສາຫະກິດດັ່ງກ່າວ ມີການດຳເນີນທຸລະກິດ ຫຼື ຊັບສິນຢູ່ປະເທດອື່ນ;

15. ຜູ້ບໍລິຫານ ໝາຍເຖິງ ຄະນະອຳນວຍການ ແລະ/ຫຼື ຜູ້ຈັດການຂອງວິສາຫະກິດລູກໜີ້;

16. ພາກສ່ວນທີ່ກ່ຽວຂ້ອງ ໝາຍເຖິງ ເຈົ້າໜີ້, ວິສາຫະກິດລູກໜີ້, ຜູ້ຄວບຄຸມຊັບສິນ ແລະ ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງກັບການຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ.

**ມາດຕາ 4 (ໃໝ່) ນະໂຍບາຍຂອງລັດກ່ຽວກັບການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ**

ລັດ ຊຸກຍູ້ ແລະ ສົ່ງເສີມ ການແກ້ໄຂວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນສະ ພາວະລົ້ມລະລາຍ ດ້ວຍການສ້າງກົນໄກ ແລະ ອຳນວຍຄວາມສະດວກ ໃຫ້ວິສາຫະກິດດັ່ງກ່າວ ສາມາດຟື້ນຟູ ຫຼື ລົ້ມລະລາຍ ຖືກຕ້ອງຕາມກົດໝາຍ ແລະ ມີປະສິດທິພາບ.

ລັດ ເອົາໃຈໃສ່ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ເຈົ້າໜີ້, ວິສາຫະກິດລູກໜີ້, ຜົນປະໂຫຍດຂອງລັດ ແລະ ບຸກຄົນອື່ນ ທີ່ກ່ຽວຂ້ອງໃນການຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ.

**ມາດຕາ 5 (ໃໝ່) ຫຼັກການກ່ຽວກັບການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ**

ການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ນຳໃຊ້ການຟື້ນຟູ ຫຼື ການລົ້ມລະລາຍຂອງວິສາຫະກິດ ເປັນທາງເລືອກໃນການແກ້ໄຂ;

2. ຮັບປະກັນການປະຕິບັດຕໍ່ເຈົ້າໜີ້ ຢ່າງເປັນທຳ ແລະ ໄດ້ຮັບການໃຊ້ແທນໜີ້ສິນ ຕາມກົດໝາຍ;

3. ກວດກາ ແລະ ຄວບຄຸມຊັບສິນຂອງວິສາຫະກິດລູກໜີ້ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມກົດໝາຍ ພ້ອມທັງຮັບປະກັນການປະມູນຂາຍ ແລະ ໂອນຊັບສິນ ຕາມມູນຄ່າຕະຫຼາດ ໃນແຕ່ລະໄລຍະ;

4. ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ, ຖືກຕ້ອງຕາມກົດໝາຍ, ວ່ອງໄວ ແລະ ມີປະສິດທິຜົນ;

5. ຮັບປະກັນການເຂົ້າຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ເປີດເຜີຍຕໍ່ສາທາລະນະ, ຍົກເວັ້ນຂໍ້ມູນທີ່ເປັນຄວາມລັບ.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນສະພາ ວະລົ້ມລະລາຍ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍຢູ່ ສປປລາວ ແລະ ຊັບສິນຂອງວິສາຫະກິດດັ່ງກ່າວ ທີ່ຢູ່ພາຍໃນ ຫຼື ຕ່າງປະເທດ ລວມທັງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການຟື້ນຟູ ຫຼື ການລົ້ມລະລາຍຂອງວິສາຫະກິດຢູ່ ສປປລາວ.

ກົດໝາຍສະບັບນີ້ ບໍ່ນຳໃຊ້ສຳລັບການຟື້ນຟູ ຫຼື ການລົ້ມລະລາຍຂອງທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ ທີ່ຮັບເງິນຝາກ ແລະ ບໍລິສັດປະກັນໄພ.

**ມາດຕາ 7 (ໃໝ່) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ, ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຟື້ນຟູ ແລະ ການລົ້ມລະລາຍ ຂອງວິສາຫະກິດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການພັດທະນາບຸກຄະລາກອນ ລວມທັງການດຳເນີນການລົ້ມລະລາຍຂ້າມແດນ ເພື່ອພັດທະນາວຽກງານດັ່ງກ່າວ ໃຫ້ທັນສະໄໝ, ມີປະສິດທິພາບ ແລະ ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

### ພາກທີ II
### ການຮ້ອງຂໍຟື້ນຟູ, ການຮ້ອງຂໍ ຫຼື ຮ້ອງຟ້ອງລົ້ມລະລາຍ

**ມາດຕາ 8 (ປັບປຸງ) ຜູ້ມີສິດຮ້ອງຂໍຟື້ນຟູ ຫຼື ລົ້ມລະລາຍ**

ຜູ້ມີສິດຮ້ອງຂໍ ໃຫ້ສານພິຈາລະນາການຟື້ນຟູ ຫຼື ການລົ້ມລະລາຍຂອງວິສາຫະກິດ ມີ ດັ່ງນີ້:

1. ວິສາຫະກິດ ທີ່ຢູ່ໃນສະພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນພາວະລົ້ມລະລາຍ;

2. ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ຂອງວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນສະພາວະລົ້ມລະລາຍ ທີ່ຕາງໜ້າໃຫ້ຢ່າງໜ້ອຍ ຊາວສ່ວນຮ້ອຍ ຂອງຮຸ້ນທີ່ມີສິດລົງຄະແນນສຽງທັງໝົດ ໃນກໍລະນີວິສາຫະກິດນັ້ນ ບໍ່ຮ້ອງຂໍຟື້ນຟູ ຫຼື ລົ້ມລະລາຍ;

3. ສະມາຊິກສະຫະກອນ ຕາງໜ້າໃຫ້ຢ່າງໜ້ອຍ ໜຶ່ງສ່ວນຫ້າ ຂອງສະມາຊິກທັງໝົດ ໃນກໍ ລະນີສະຫະກອນ ມີຄວາມຫຍຸ້ງຍາກທາງດ້ານການເງິນ ແລະ ບໍ່ສາມາດຊຳລະໜີ້ສິນ.

ວິສາຫະກິດທີ່ຖືກຮ້ອງຟ້ອງໃຫ້ລົ້ມລະລາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້ ກໍສາມາດຮ້ອງຂໍໃຫ້ສານພິຈາລະນາການຟື້ນຟູວິສາຫະກິດ ໃນເວລາມີການແກ້ຟ້ອງ. ໃນກໍລະນີວິສາຫະກິດທີ່ຖືກຮ້ອງຟ້ອງນັ້ນ ເປັນວິສາຫະກິດຂະໜາດນ້ອຍ ແລະ ຈຸນລະວິສາຫະກິດ ກໍສາມາດຮ້ອງຂໍການຟື້ນຟູ ຕາມທີ່ໄດ້ກຳນົດໄວ້ໃນພາກທີ VI ຂອງກົດໝາຍສະບັບນີ້.

**ມາດຕາ 9 (ປັບປຸງ) ສຳນວນຄຳຮ້ອງຂໍຟື້ນຟູ ຫຼື ລົ້ມລະລາຍ**

ສຳນວນຄຳຮ້ອງຂໍຟື້ນຟູ ຫຼື ລົ້ມລະລາຍ ປະກອບດ້ວຍ:

1. ຄຳຮ້ອງຂໍ ຕາມແບບພິມທີ່ສານກຳນົດ;

2. ບົດບັນທຶກ ຫຼື ມະຕິຂອງຂາຮຸ້ນ ຫຼື ກອງປະຊຸມຜູ້ຖືຮຸ້ນ ໃຫ້ຮ້ອງຂໍຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ ຍົກເວັ້ນວິສາຫະກິດສ່ວນບຸກຄົນ, ບໍລິສັດຈຳກັດຜູ້ດຽວ ແລະ ການຮ້ອງຂໍຂອງຂາຮຸ້ນ ຫຼື ຜູ້ຖືຮຸ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂໍ້ 2 ຂອງກົດໝາຍສະບັບນີ້;

3. ໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

- ຊື່, ທີ່ຢູ່ ແລະ ເບີໂທລະສັບ ຂອງວິສາຫະກິດລູກໜີ້;
- ບັນຊີຊັບສິນຂອງວິສາຫະກິດລູກໜີ້ ລວມທັງ ມູນຄ່າ ແລະ ທີ່ຕັ້ງຂອງຊັບສິນດັ່ງກ່າວ;
- ບັນຊີເຈົ້າໜີ້ ລວມທັງ ຈຳນວນໜີ້ສິນ, ຊັບສິນທີ່ພົວພັນກັບການຄ້ຳປະກັນ ແລະ ຊື່, ທີ່ ຢູ່, ເບີໂທລະສັບ ຂອງເຈົ້າໜີ້ແຕ່ລະຄົນ;
- ບັນຊີຜູ້ອອກແຮງງານ ແລະ ຈຳນວນໜີ້ຄ່າແຮງງານທີ່ຄ້າງຈ່າຍ;
- ບັນຊີໜີ້ຕ້ອງຮັບຂອງວິສາຫະກິດລູກໜີ້ ລວມທັງ ຈຳນວນໜີ້ ແລະ ຊື່, ທີ່ຢູ່, ເບີໂທ ລະສັບ ຂອງລູກໜີ້ແຕ່ລະຄົນ;

4. ເອກະສານລາຍງານການເງິນ ແລະ ບົດລາຍງານປະຈຳປີຂອງວິສາຫະກິດຕົນ ສອງປີ ຜ່ານມາ, ຖ້າວິສາຫະກິດເຄື່ອນໄຫວບໍ່ຮອດ ສອງປີ ກໍໃຫ້ລາຍງານນັບແຕ່ວັນເລີ່ມດຳເນີນທຸລະກິດ;

5. ເອກະສານອື່ນ ທີ່ພົວພັນກັບການຮ້ອງຂໍ.

**ມາດຕາ 10 (ປັບປຸງ) ຜູ້ມີສິດຮ້ອງຟ້ອງໃຫ້ວິສາຫະກິດລົ້ມລະລາຍ**

ຜູ້ມີສິດຮ້ອງຟ້ອງ ໃຫ້ສານພິຈາລະນາການລົ້ມລະລາຍຂອງວິສາຫະກິດ ມີ ດັ່ງນີ້:

1. ເຈົ້າໜີ້ ຂອງວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ ທີ່ມີມູນຄ່າໜີ້ສິນຢ່າງໜ້ອຍ ສິບລ້ານກີບ ແລະ ໄດ້ທວງໃຫ້ວິສາຫະກິດລູກໜີ້ ຊຳລະໜີ້ສິນແລ້ວ ຢ່າງໜ້ອຍ ສາມຄັ້ງ ຊຶ່ງແຕ່ລະຄັ້ງຫ່າງກັນບໍ່ຫຼຸດ ຊາວວັນ ແລະ ວິສາຫະກິດລູກໜີ້ ກໍຮັບຮູ້ການທວງໜີ້ແລ້ວ ແຕ່ຫາກບໍ່ຊຳລະໜີ້ສິນ;

2. ຜູ້ອອກແຮງງານ ຫຼື ສະຫະພັນກຳມະບານ ໃນກໍລະນີວິສາຫະກິດຢູ່ໃນສະພາວະລົ້ມລະ ລາຍ ບໍ່ຈ່າຍເງິນເດືອນ ແລະ/ຫຼື ຄ່າແຮງງານ ເປັນເວລາສາມເດືອນ ຕິດຕໍ່ກັນ.

ການຮ້ອງຟ້ອງ ທີ່ບໍ່ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ແລະ ຂໍ້ 2

ອ່ານຕໍ່ສະບັບຫນ້າ...



**ເຂົ້າໃຈຄຳສັບ ກົດໝາຍ**

ຄັດໂດຍ: ສ.ສາຍນ້ຳທາ

*ກົດໝາຍວ່າດ້ວຍການໃຫ້ວັກຊີນກັນພະຍາດ*

1. ກັບນິລະໄພ ໝາຍເຖິງກັບເຈ້ຍແຂງສະເພາະ ທີ່ໃຊ້ບັນຈຸເຂັມ ແຮງ ແລະ ເຂັມສັກຢາທີ່ໄດ້ຖືກນຳໃຊ້ແລ້ວ ເພື່ອປ້ອງກັນບໍ່ໃຫ້ເຂັມປັກຄົນ, ສັດ, ປົນເປື້ອນສິ່ງແວດລ້ອມ ແລະ ແຜ່ເຊື້ອພະຍາດ;

2. ກຸ່ມເປົ້າໝາຍ ໝາຍເຖິງກຸ່ມຄົນ ທີ່ຢູ່ໃນເກນອາຍຸ ແລະ ກຸ່ມຄົນໃນເຂດທີ່ມີຄວາມສ່ຽງ ທີ່ກະຊວງສາທາລະນະສຸກ ໄດ້ກຳນົດໃນແຕ່ລະໄລຍະ ເຊິ່ງຈະຕ້ອງໄດ້ຮັບວັກຊີນກັນພະຍາດໃດໜຶ່ງສະເພາະ.

ອ່ານຕໍ່ສະບັບໜ້າ




# ລັດຖະສະພາການາດາ ຮຽກຮ້ອງໃຫ້ ນາຍົກລັດຖະມົນຕີ ໃຊ້ອຳນາດສຸກເສີນ

# ນາກ ເມືອງມະໂນ



ໃນວັນທີ 22 ກຸມພານີ້, ສຳນັກຂ່າວ BBC ໄດ້ລາຍງານວ່າ: ລັດຖະສະພາການາດາ ໄດ້ສະໜັບສະໜູນການຕັດສິນໃຈຂອງລັດຖະບານໃນການນຳໃຊ້ກົດໝາຍວ່າດ້ວຍສະຖານະການສຸກເສີນເພື່ອຮັບມືກັບການປິດລ້ອມການແຫ່ຂະບວນປະທ້ວງຕ້ານມາດຕະການປ້ອງກັນພະຍາດໂຄວິດ-19 ເປັນເວລາຫລາຍອາທິດແລ້ວນັບຕັ້ງແຕ່ເດືອນມັງກອນ.

ກົດໝາຍດັ່ງກ່າວ ໄດ້ຜ່ານດ້ວຍຄະແນນສຽງ 185-151 ສຽງ ໃນວັນຈັນທີ 21 ກຸມພານີ້ ໄດ້ຮັບການສະໜັບສະໜູນຈາກພັກຝ່າຍຊ້າຍເສລີ ແລະ ປະຊາທິປະໄຕໃໝ່ທີ່ເປັນພັກການເມືອງຝ່າຍຊ້າຍ, ສ່ວນສະມາຊິກພັກອະນຸລັກ ເຊິ່ງເປັນຝ່າຍຄ້ານຢ່າງເປັນທາງການ ແລະ ກຸ່ມຄວິເບກົວ (Bloc Quebecois) ໄດ້ລົງຄະແນນສຽງຄັດຄ້ານ.

ທ່ານ ຈັດສະຕິນ ທຣູໂດ ນາຍົກລັດຖະມົນຕີການາດາ ໄດ້ປະກາດກົດໝາຍວ່າດ້ວຍສະຖານະການສຸກເສີນໃນຕົ້ນອາທິດຜ່ານມາ ແລະ ໃນວັນຈັນທີ 14 ກຸມພານີ້, ນາຍົກລັດຖະມົນຕີ ໄດ້ສືບຕໍ່ປ້ອງກັນການໃຊ້ອຳນາດພາວະສຸກເສີນຊົ່ວຄາວ; ທ່ານກ່າວວ່າ: ສະຖານະການໃນທົ່ວປະເທດຍັງອ່ອນໄຫວ ແລະ ຈຳເປັນຕ້ອງສະກັດກັ້ນການປະທ້ວງຄັ້ງໃໝ່, ອຳນາດຕ່າງໆນັ້ນ ຈະບໍ່ເກີນເກີນຄວາມຈຳເປັນພຽງແຕ່ມື້ດຽວ.

ກົດໝາຍວ່າດ້ວຍສະຖານະການສຸກເສີນຂອງການາດາ ໄດ້ຮັບຮອງເອົາໂດຍລັດຖະສະພາໃນປີ 1988 ແລະ ບໍ່ເຄີຍໃຊ້ມາກ່ອນ ໂດຍການໃຫ້ອຳນາດລັດຖະບານເພີ່ມເຕີມໃນເວລາເກີດວິກິດການແຫ່ງຊາດ ເຊິ່ງຈະແກ່ຍາວເປັນເວລາ 30 ວັນ ຍົກເວັ້ນແຕ່ຈະມີການປ່ຽນໃໝ່ອີກ.

ລັດຖະບານການາດາໄດ້ນຳໃຊ້ກົດໝາຍວ່າດ້ວຍສະຖານະການສຸກເສີນໃນອາທິດແລ້ວນີ້ ເພື່ອກຳນົດການຫ້າມການຊຸມນຸມສາທາລະນະໃນບາງພື້ນທີ່ຂອງອອດຕາວາ ແລະ ຫ້າມເດີນທາງໄປຍັງເຂດມີການປະທ້ວງ ລວມທັງຄືນຕ່າງປະເທດ ພ້ອມທັງມາດຕະການອື່ນໆ ລວມທັງອະນຸຍາດໃຫ້ເຈົ້າໜ້າທີ່ສາມາດລະງັບບັນຊີທະນາຄານໄດ້.

## ແຈ້ງປັບລາຄານ້ຳມັນປະຈຳວັນທີ 25/02/2022

ສ່ວນຕ່າງລາຄາທີ່ປັບຂຶ້ນຈາກຄັ້ງກ່ອນ

| ລ/ດ | ຈຸດ | ແອັດຊັງພິເສດ 95 | ແອັດຊັງທຳມະດາ 91 | ກາຊວນ |
|---|---|---|---|---|
| | | +740 | +670 | +420 |
| 1 | ນະຄອນຫຼວງວຽງຈັນ | 16,930 | 14,950 | 12,940 |
| 2 | ແຂວງຜົ້ງສາລີ | 17,570 | 15,590 | 13,580 |
| 3 | ແຂວງຫຼວງນ້ຳທາ | 17,290 | 15,310 | 13,300 |
| 4 | ແຂວງອຸດົມໄຊ | 17,410 | 15,430 | 13,420 |
| 5 | ແຂວງບໍ່ແກ້ວ | 17,030 | 15,050 | 13,040 |
| 6 | ແຂວງຫຼວງພະບາງ | 17,300 | 15,320 | 13,310 |
| 7 | ແຂວງໄຊຍະບູລີ | 17,180 | 15,200 | 13,190 |
| 8 | ແຂວງຫົວພັນ | 17,330 | 15,350 | 13,340 |
| 9 | ແຂວງຊຽງຂວາງ | 17,120 | 15,140 | 13,130 |
| 10 | ແຂວງວຽງຈັນ | 16,930 | 14,950 | 12,940 |
| 11 | ແຂວງບໍລິຄຳໄຊ | 17,010 | 15,030 | 13,020 |
| 12 | ແຂວງຄຳມ່ວນ | 16,960 | 14,980 | 12,970 |
| 13 | ແຂວງສະຫວັນນະເຂດ | 16,960 | 14,980 | 12,970 |
| 14 | ແຂວງສາລະວັນ | 17,140 | 15,160 | 13,150 |
| 15 | ແຂວງຈຳປາສັກ | 16,990 | 15,010 | 13,000 |
| 16 | ແຂວງເຊກອງ | 17,140 | 15,160 | 13,150 |
| 17 | ແຂວງອັດຕະປື | 17,170 | 15,190 | 13,180 |
| 18 | ແຂວງໄຊສົມບູນ | 17,210 | 15,230 | 13,220 |




